ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

27 ມັງກອນ-02 ກຸມພາ 2023
ປີທີ 12
ສະບັບທີ 907
ລາຍສັບປະດາ

ສຳນັກງານຕັ້ງຢູ່ອາລານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

## ສະພາແຫ່ງຊາດ ທາບທາມແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ປະເພດທີ I

(ສພຊ) ໃນວັນທີ 23 ມັງກອນ 2023 ທີ່ຫ້ອງປະຊຸມສະພາແຫ່ງຊາດ, ໄດ້ມີການທາບທາມບຸກຄະລາກອນເຂົ້າໃນແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ປະເພດທີ I ທີ່ຂຶ້ນກັບສິດຄຸ້ມຄອງຂອງກົມການເມືອງ ແລະ ຄະນະເລຂາທິການສູນກາງພັກ ໂດຍການເປັນປະທານຂອງສະຫາຍ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ; ມີສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາ





ແຫ່ງຊາດ; ສະຫາຍ ນາງ ປິ່ງຄຳ ລາຊະສິມມາ ກຳມະການສູນກາງພັກ, ເລຂາທິການສະພາແຫ່ງຊາດ; ບັນດາປະທານ-ຮອງປະທານກຳມາທິການ, ຄະນະເລຂາທິການ, ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ, ໜ່ວຍງານຈາກຄະນະຈັດຕັ້ງສູນກາງພັກ, ຄະນະກົມ ແລະ ອົງການຈັດຕັ້ງລັດທຽບເທົ່າກົມ (ສູນ, ຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດ) ເຂົ້າຮ່ວມຢ່າງພ້ອມພຽງ.

ທັງນີ້, ເພື່ອເປັນການສ້າງແຜນກຳນົດພະນັກງານນຳພາຄຸ້ມຄອງ ປະເພດທີ I (1.2; 1.3; 1.4) ພາຍໃນສະພາແຫ່ງຊາດ ແມ່ນການຄາດຄະເນ, ການເລືອກເຟັ້ນພະນັກງານນຳພາ-ຄຸ້ມຄອງ ເພື່ອຈັດວາງເຂົ້າໃນແຜນ ເຊິ່ງປະກອບມີເລຂາ, ຫົວໜ້າສຳນັກງານ, ຮອງເລຂາ, ຮອງຫົວໜ້າສຳນັກງານ, ຄະນະບໍລິຫານງານພັກສະພາແຫ່ງຊາດ, ບັນດາຄະນະກຳມາທິການ, ຄະນະເລຂາທິ

ອ່ານຕໍ່ໜ້າ 2

## ຮອງປະທານສະພາແຫ່ງຊາດ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງຄະນະຜູ້ແທນລາສະດອນ ແຫ່ງລາຊະອານາຈັກໄທ



(ສພຊ) ໃນຕອນເຊົ້າຂອງວັນທີ 23 ມັງກອນ 2023, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງຄະນະຜູ້ແທນລາສະດອນ ແຫ່ງລາຊະອານາຈັກໄທ ນຳໂດຍທ່ານ ສົມສັກ ຄຸນເງິນ ປະທານຄະນະກຳມາທິການການເງິນ,

ອ່ານຕໍ່ໜ້າ 4

## ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ສະຫຼຸບວຽກງານ ປະຈຳປີ 2022

(ສພຊ) ໃນວັນທີ 23 ມັງກອນ 2023 ທີ່ສະພາແຫ່ງຊາດ ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ໄດ້ຈັດກອງປະຊຸມສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2022 ໂດຍການເປັນປະທານຂອງທ່ານ ປອ. ຢ່າງກູ້ ຢ່າງລືໄຊ ຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ, ໂດຍການເຂົ້າຮ່ວມຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ, ຜູ້ຊີ້ນຳສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ, ມີບັນດາທ່ານ



ຮອງປະທານກຳມາທິການ, ຮອງເລຂາທິການສະພາແຫ່ງຊາດ, ບັນດາທ່ານຕາງໜ້າເລຂາທິການສະພາປະຊາຊົນຂັ້ນແຂວງ, ຄະນະສະຖາບັນ, ຄະນະສູນ ແລະ ພະນັກງານ-ລັດຖະກອນ ພາຍໃນສະຖາບັນເຂົ້າຮ່ວມ.

ອ່ານຕໍ່ໜ້າ 4

## ກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ສຳເລັດກອງປະຊຸມຄົບຄະນະ ປະຈຳປີ 2022



(ສພຊ) ໃນລະຫວ່າງວັນທີ 16-17 ມັງກອນ 2023 ທີ່ສະພາແຫ່ງຊາດ ກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ໄດ້ມີກອງປະຊຸມຄົບຄະນະ ປະຈຳປີ 2022 ຂອງຕົນຂຶ້ນ ເຊິ່ງໄດ້ດຳເນີນເປັນເວລາໜຶ່ງວັນເຄິ່ງ ດ້ວຍບັນຍາ

ອ່ານຕໍ່ໜ້າ 4

## ທູດອິນໂດເນເຊຍ ເຂົ້າຢ້ຽມຂໍ່ານັບອຳລາ ທ່ານຮອງປະທານສະພາແຫ່ງຊາດ



ໜ້າ 4



**ກອງປະຊຸມສະໄໝສາມັນເທື່ອທີ 4...**

ອ່ານຕໍ່ໜ້າ 7



**ສະພາປະຊາຊົນແຂວງອັດຕະປື...**

ອ່ານຕໍ່ໜ້າ 6



**ປະເມີນຜົນການຈັດຕັ້ງປະຕິບັດວຽກງານ...**

ອ່ານຕໍ່ໜ້າ 5

# ກອງປະຊຸມສະມັດຊາລັດຖະສະພາອາຊີ (APA) ຄັ້ງທີ 13



(ສພຊ) ຄະນະຜູ້ແທນສະພາແຫ່ງຊາດລາວ ນຳໂດຍ ທ່ານ ຈັນທະວົງ ແສນອາມາດ ມົນຕີ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ພ້ອມດ້ວຍຄະນະ ໄດ້ເດີນທາງເຂົ້າຮ່ວມກອງປະຊຸມຄະນະບໍລິຫານງານ ແລະ ກອງປະຊຸມຄົບຄະນະ ຂອງສະມັດຊາລັດຖະສະພາອາຊີ (APA) ຄັ້ງທີ 13 ເຊິ່ງຈັດຂຶ້ນທີ່ ອັນໂຕຢາ ປະເທດຕຸຣະກີ, ໃນລະຫວ່າງວັນທີ 6-11 ມັງກອນ 2023 ມີຄະນະຜູ້ແທນເຂົ້າຮ່ວມທັງໝົດ 262 ທ່ານ ທີ່ມາຈາກ 25 ປະເທດ ພ້ອມທັງຜູ້ຕາງໜ້າຈາກສະມາຊິກລັດຖະສະພາປະເທດສັງເກດການ 2 ປະເທດ ແລະ ອົງການຈັດຕັ້ງສັງເກດການ 3 ອົງການ.

ກອງປະຊຸມຄັ້ງນີ້, ຄະນະຜູ້ແທນທີ່ເຂົ້າຮ່ວມໄດ້ປຶກສາຫາລື ແລະ ແລກປ່ຽນຄຳຄິດຄຳເຫັນ ພາຍໃຕ້ຫົວຂໍ້ "ການຊຸກຍູ້ລັດທິຫຼາຍຝ່າຍ ໃນການປ່ຽນແປງຂະບວນການຂອງໂລກ" ພ້ອມທັງຄົ້ນຄວ້າ ແລະ ປະກອບຄຳເຫັນຕໍ່ບັນດາຮ່າງມະຕິທີ່ສະເໜີໃນກອງປະຊຸມຄະນະກຳມະການຕ່າງໆ ຂອງສະມັດຊາລັດຖະສະພາອາຊີເຊັ່ນ: ກອງປະຊຸມຄະນະກຳມະການການເມືອງ, ຄະນະກຳມະການເສດຖະກິດ ແລະ ການພັດທະນາແບບຍືນຍົງ, ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ຄະນະກຳມະການງົບປະມານ ແລະ ແຜນການ.

ໃນການເຂົ້າຮ່ວມກອງປະຊຸມຄັ້ງນີ້, ຜູ້ແທນສະພາແຫ່ງຊາດລາວ ໄດ້ມີຄຳເຫັນໃນກອງປະຊຸມໂດຍໄດ້ຍົກໃຫ້ເຫັນສິ່ງທ້າທາຍຫຼາຍດ້ານທີ່ສົ່ງຜົນກະທົບຕໍ່ສະຖຽນລະພາບ ແລະ ຄວາມໝັ້ນຄົງໃນພາກພື້ນ ກໍຄືໃນໂລກ ເປັນຕົ້ນແມ່ນການແຜ່ລະບາດຂອງພະຍາດໂຄວິດ-19, ໄພທຳມະຊາດ, ການປະທະກັນທາງດ້ານອາວຸດໃນພາກພື້ນ, ບັນຫາດ້ານການເງິນ, ອາຫານ, ພະລັງງານ, ການຂາດແຄນນ້ຳມັນເຊື້ອໄຟ ແລະ ບັນຫາອື່ນໆ. ພ້ອມດຽວກັນນັ້ນ, ທ່ານກໍໄດ້ຍົກໃຫ້ເຫັນເຖິງນະໂຍບາຍການຕ່າງປະເທດສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມື ຂອງ ສປປລາວ ແລະ ບົດບາດຂອງສະພາແຫ່ງຊາດລາວ ໃນນາມເປັນຕົວແທນແຫ່ງສິດ, ຜົນປະໂຫຍດ ແລະ ຄວາມມຸ່ງມາດປາຖະໜາຂອງປະຊາຊົນລາວບັນດາເຜົ່າ ເຊິ່ງເປັນການປະກອບສ່ວນທີ່ສຳຄັນເຂົ້າໃນການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍລະບຽບກົດໝາຍ. ພ້ອມນັ້ນ, ທ່ານຍັງໄດ້ຮຽກຮ້ອງໃຫ້ຜູ້ຂ້າຮ່ວມກອງປະຊຸມໃນຖານະທີ່ເປັນສະມາຊິກສະມັດຊາລັດຖະສະພາອາຊີ ຕ້ອງຖືເອົາໂອກາດກອງປະຊຸມຄົບຄະນະຄັ້ງທີ 13 ຂອງ APA ເປັນເວທີເພື່ອເສີມຂະຫຍາຍບົດບາດນິຕິບັນຍັດໃນການຊຸກຍູ້ສັນຕິພາບ, ຄວາມໝັ້ນຄົງ ແລະ ຄວາມຈະເລີນຮຸ່ງເຮືອງຢູ່ພາກພື້ນ, ຊຸກຍູ້ຄວາມໄວ້ເນື້ອເຊື່ອໃຈ, ການຮ່ວມມື ແລະ ການຊ່ວຍເຫຼືອເຊິ່ງກັນແລະກັນ ຕາມກົນໄກບົດບາດຂອງລັດຖະສະພາ ເພື່ອຮັບມືກັບສິ່ງທ້າທາຍ ແລະ ແກ້ໄຂບັນຫາພາກພື້ນແລະສາກົນ.

## ສະພາແຫ່ງຊາດ...

(ຕໍ່ຈາກໜ້າ 1)

ການ, ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ, ຫົວໜ້າກົມ, ຫົວໜ້າອົງການຈັດຕັ້ງລັດທຽບເທົ່າກົມ ແນໃສ່ຮັບປະກັນທາງດ້ານຈຳນວນ ແລະ ຄຸນນະພາບ, ໂຄງປະກອບບຸກຄະລາກອນໃຫ້ຄົບຊຸດ, ຮັບປະກັນລັກສະນະສືບທອດ, ປ່ຽນແທນ ຕໍ່ເນື່ອງໃນສະເພາະໜ້າ ແລະ ຍາວນານ; ເພື່ອເປັນການກະກຽມດ້ານບຸກຄະລາກອນໃຫ້ສາມາດຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຂອງບັນດາຕຳແໜ່ງພະນັກງານນຳພາ-ຄຸ້ມຄອງ ແຕ່ລະຂັ້ນ ພາຍໃນສະພາແຫ່ງຊາດ ທັງຮັບປະກັນລັກສະນະເປີດກວ້າງ, ມີຄວາມໂປ່ງໃສ, ພາວະວິໄສ, ຮອບດ້ານ.



ໃນພິທີ, ໄດ້ຮັບຟັງການຜ່ານບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນການສ້າງພະນັກງານນຳພາ-ຄຸ້ມຄອງພາຍໃນສະພາແຫ່ງຊາດ (ຊຸດທີ VIII); ມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 032/ກມສພ, ລົງວັນທີ 03/01/2018 ວ່າດ້ວຍວຽກງານການສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ-ນຳພາ; ມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 030/ກມສພ, ລົງວັນທີ 03/01/2018 ວ່າດ້ວຍມາດຕະຖານຂອງພະນັກງານນຳພາ-ຄຸ້ມຄອງ; ຄຳແນະນຳຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 292/ຄຈສພ, ລົງວັນທີ 26/04/2018 ແລະ ແນະນຳວິທີການທາບທາມ ແລະ ດຳເນີນການທາບທາມ ຮອບທີ I ຂັ້ນສູນກາງຄຸ້ມຄອງ; ຈາກນັ້ນ, ກອງປະຊຸມກໍໄດ້ຢາຍບັດທາບທາມ ຮອບທີ I.

ການທາບທາມດັ່ງກ່າວແມ່ນຈະໄດ້ສືບຕໍ່ທາບທາມຕື່ມອີກຮອບທີ II ແລະ III ຈົນຮອດວັນທີ 27 ມັງກອນ 2023 ຈຶ່ງຈະສຳເລັດ.

(ຂ່າວ: ສຸພາວັນ ທອມສະນິດ; ພາບ ກຸກກິກ ບຸດດາໄຊ)

## ເລື່ອງ ເດັ່ນ ຂ່າວ ເດັດ

# ຄັດໂດຍ: ທອມສະນິດ

*❐ ຈະທົດລອງປ່ອຍຍຸງລາຍບ້ານ ທີ່ຖືເຊື້ອໂວບັກເຄຍ ຢູ່ເມືອງຈັນທະບູລີ ແລະ ເມືອງໄຊເສດຖາ ໃນ 30 ກວ່າບ້ານ ເຊິ່ງຍຸງລາຍບ້ານທີ່ຖືເຊື້ອໂວບັກເຄຍ ຈະມີພູມຄຸ້ມກັນທີ່ສາມາດຢັບຢັ້ງເຊື້ອໄວຣັສພາຍໃນໂຕມັນເອງ ເວລາຍຸງດັ່ງກ່າວໄປກັດຜູ້ປ່ວຍໄຂ້ຍຸງລາຍ ຫລື ພະຍາດອື່ນໆ ທີ່ມີຍຸງລາຍເປັນພາຫະນຳເຊື້ອ ຈະບໍ່ສາມາດສົ່ງຕໍ່ພະຍາດດັ່ງກ່າວໄປຫາຜູ້ອື່ນເນື່ອງຈາກເຊື້ອໂວບັກເຄຍໃນໂຕຍຸງໄດ້ທຳລາຍເຊື້ອໄວຣັສດັ່ງກ່າວພາຍໃນໂຕມັນເອງຜ່ານການຄົ້ນຄວ້າວິໄຈໂຄງການຄວບຄຸມປະຊາກອນຍຸງໂລກສະແດງໃຫ້ເຫັນວ່າການປ່ອຍຍຸງລາຍບ້ານທີ່ມີເຊື້ອໂວບັກເຄຍ ຈະສາມາດຫລຸດຜ່ອນການສົ່ງຕໍ່ເຊື້ອໄຂ້ຊະນິດດັ່ງກ່າວໄດ້ດ້ວຍການນຳເອົາຍຸງລາຍບ້ານທີ່ຖືເຊື້ອໂວບັກເຄຍໄປປ່ອຍໃນເຂດພື້ນທີ່ທີ່ມີການລະບາດຂອງໄຂ້ຍຸງລາຍເພື່ອໃຫ້ຍຸງລາຍທີ່ມີເຊື້ອໄປປະສົມພັນກັບຍຸງລາຍທີ່ບໍ່ມີເຊື້ອ ຈະເຮັດໃຫ້ຈຳນວນຍຸງລາຍບ້ານທີ່ມີເຊື້ອໂວບັກເຄຍແຜ່ຂະຫຍາຍເພີ່ມຂຶ້ນແຕ່ມີຄວາມປອດໄພຕໍ່ຄົນ, ສັດ ແລະ ສິ່ງແວດລ້ອມ, ໃນໄລຍະປ່ອຍຍຸງ 20 ອາທິດ ເຊິ່ງຈອກປ່ອຍຍຸງ 1 ໜ່ວຍ ຈະປ່ອຍໃນພື້ນທີ 50X50 ແມັດ ຊ່ວງປ່ອຍຍຸງ ແລະ ຫລັງປ່ອຍຍຸງ ປະຊາຊົນ ຫລື ແຕ່ລະຄົວເຮືອນ ສາມາດປະຕິບັດ 2 ມາດຕະການຄຸ້ມຄອງພາຫະນະນຳເຊື້ອຕາມປົກກະຕິ ໝາຍຄວາມວ່າປະຊາຊົນ ສາມາດທຳລາຍແຫລ່ງເພາະພັນຍຸງທັງໃນບ້ານ ແລະ ນອກບ້ານໄດ້ ແຕ່ຫ້າມທຳລາຍຈອກແຈກຢາຍຍຸງຂອງໂຄງການຢ່າງເດັດຂາດ.*

***ໜສພ. ປະເທດລາວ 20/01/2023***

*❐ ສປປລາວ ມີມໍລະດົກໂລກທາງດ້ານວັດທະນະທຳທີ່ເປັນຮູບປະທຳ ເພີ່ມຂຶ້ນເປັນ 3 ແຫ່ງ ຄື: ນະຄອນປະຫວັດສາດ ຫລວງພະບາງ, ວັດພູ ພ້ອມດ້ວຍພູມີທັດວັດທະນະທຳຈຳປາສັກ ແລະ ທົ່ງໄຫຫີນ ແຂວງຊຽງຂວາງ. ນອກຈາກນີ້, ພາຍໃຕ້ສົນທິສັນຍາ 2003 ວ່າດ້ວຍການປົກປ້ອງມໍລະດົກທີ່ເປັນນາມມະທຳ ຂອງອົງການອຸຍແນັສໂກ ໃນທ້າຍປີ 2017 ສປປລາວ ກໍໄດ້ຂຶ້ນທະບຽນສຽງແຄນເຊື້ອຊາດລາວເຂົ້າຢູ່ໃນບັນຊີຕົວແທນແຫ່ງມໍລະດົກວັດທະນະ ທຳນາມມະທຳ ຂອງມວນມະນຸດສະຍະຊາດ; ຄະນະກຳມະການລະດັບຊາດ ເພື່ອມໍລະດົກໂລກ ຍັງໄດ້ຄົ້ນຄວ້າຄຳຮ້ອງສະເໜີອຸທິຍານແຫ່ງຊາດ ຫີນໜາມໜໍ່ເປັນມໍລະດົກໂລກຮ່ວມຊາຍແດນກັບອຸທິຍານແຫ່ງຊາດ ຟອງຫຍາແກບາງ ມໍລະດົກໂລກ ຂອງ ສສ.ຫວຽດນາມ.*

***ໜສພ. ປະເທດລາວ 23/01/2023***

*❐ ໄຟຟ້າລາວ ກຳລັງປະຕິບັດ 4 ມາດຕະການເລັ່ງດ່ວນຄື: 1. ປະຕິຮູບອົງກອນ ໂດຍການປະຕິຮູບກົນໄກ ແລະ ຄົນ, 2. ຄົ້ນຄວ້າປັບປຸງ ໂຄງສ້າງລາຄາໄຟຟ້າໃຫ້ສອດຄ່ອງ, ເປັນທຳຕໍ່ຜູ້ຊື້ ແລະ ຜູຂາຍ, 3. ເຈລະຈາປັບປຸງສັນຍາຊື້-ຂາຍໄຟ ກັບບັນດາແຫຼ່ງຜະລິດໃຫ້ຫຼຸດລົງເພື່ອຫຼຸດຕົ້ນທຶນ, 4. ເຈລະຈາຂໍປັບໂຄງສ້າງໜີ້ ກັບທະນາຄານ ແລະ ສະຖາບັນການເງິນຕ່າງໆ, ເລີ່ມແຕ່ນີ້ເປັນຕົ້ນໄປ ໄຟຟ້າລາວຈະເຮັດໃຫ້ການບໍລິຫານ ແລະ ດຳເນີນທຸລະກິດ ມີຄວາມໂປ່ງໃສ, ມີປະສິດທິພາບ, ກວດສອບໄດ້ເພື່ອສ້າງຄວາມເຊື່ອໝັ້ນໃຫ້ກັບທຸກພາກສ່ວນ, ສ້າງຄວາມໝັ້ນຄົງທາງດ້ານພະລັງງານ (ຈຳກັດໄຟເຫຼືອບໍ່ພໍ), ຊື້ໄຟທີ່ມີຄຸນນະພາບ ແລະເປັນປະໂຫຍດແກ່ລະບົບຂອງໄຟຟ້າລາວ ໃນລາຄາທີ່ສົມເຫດສົມຜົນ, ຫຼຸດລາຄາສະເລ່ຍລວມຂອງການຊື້ໄຟໃຫ້ຕ່ຳລົງ, ການລົງທຶນໃໝ່ຕ້ອງຮັບປະກັນໃຫ້ມີປະສິດທິຜົນ, ສ້າງລາຍຮັບອື່ນໆຈາກທ່າແຮງຂອງໄຟຟ້າລາວ ເພື່ອບໍ່ໃຫ້ລາຄາໄຟຟ້າພາຍໃນປະເທດສູງເກີນໄປ ແລະ ບໍລິການໃຫ້ເຊົ່າສາຍໃຍແກ້ວ Fiber Optic.*

***ໜສພ. ປະຊາຊົນ 23/01/2023***

*❐ ປີ 2023 ກະຊວງຖະແຫລ່ງຂ່າວວັດທະນະທຳ ແລະ ທ່ອງທ່ຽວ ໄດ້ວາງຄາດໝາຍສູ້ຊົນດຶງດູດນັກທ່ອງທ່ຽວພາກພື້ນ ແລະ ສາກົນ ໃຫ້ໄດ້ 1,4 ລ້ານເທື່ອຄົນ ແລະ ສ້າງລາຍຮັບ 340 ລ້ານໂດລາ ສະເລ່ຍໄລຍະພັກເຊົາ 7 ວັນ/ຄົນ ສູ້ຊົນສົ່ງເສີມນັກທ່ອງທ່ຽວພາຍໃນ "ລາວທ່ຽວລາວ" ໃຫ້ໄດ້ 1,2 ລ້ານເທື່ອຄົນ ລວມນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ ທ່ຽວລາວທັງໝົດ 2,6 ລ້ານເທື່ອຄົນ ສ້າງລາຍຮັບໄດ້ 1,3 ຕື້ກີບ ສະເລ່ຍໄລຍະພັກເຊົາ 2 ວັນ/ຄົນ.*

***ໜສພ. ວຽງຈັນໃໝ່ 26/01/2023***

# ກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕັ້ງໜ້າຈັດຕັ້ງປະຕິບັດ 3 ພາລະບົດບາດຂອງຕົນ



(ສພຊ) ໃນວັນທີ 14 ທັນວາຜ່ານມາ, ທ່ານ ພົຕ. ປອ. ວົງສັກ ພັນທະວົງ ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາແຫ່ງຊາດ ໄດ້ໃຫ້ສຳພາດແກ່ສື່ມວນຊົນສະພາແຫ່ງຊາດ ເນື່ອງໃນໂອກາດເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງທ່ານໄດ້ໃຫ້ຮູ້ວ່າ: ກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແມ່ນກຳມາທິການໜຶ່ງໃນກົງຈັກການຈັດຕັ້ງຂອງສະພາແຫ່ງຊາດ, ທີ່ເປັນເສນາທິການໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ ແລະ ສະພາແຫ່ງຊາດ ໃນການຈັດຕັ້ງປະຕິບັດ 3 ພາລະບົດບາດຂອງສະພາແຫ່ງຊາດ: ດ້ານນິຕິບັນຍັດ, ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ແລະ ດ້ານການຕິດຕາມກວດກາ ໃນຂົງເຂດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເຊິ່ງນັບແຕ່ກອງປະຊຸມສະໄໝສາມັນເທື່ອທີ 3 ຫາເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX, ກຳມາທິການໄດ້ຕັ້ງໜ້າໃນການປະຕິບັດ 3 ພາລະບົດດັ່ງກ່າວ ແລະ ຍາດໄດ້ຜົນງານທີ່ພົ້ນເດັ່ນຈຳນວນໜຶ່ງ ເປັນຕົ້ນ:

- **ດ້ານນິຕິບັນຍັດ:** ໄດ້ສົມທົບກັບບັນດາກະຊວງທີ່ກ່ຽວຂ້ອງ ແລະ ກຳມາທິການກົດໝາຍ ຂອງສະພາແຫ່ງຊາດ ຄົ້ນຄວ້າສ້າງ ແລະ ປັບປຸງບັນດາກົດໝາຍ ໃນຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໄດ້ 2 ສະບັບ ຄື: ກົດໝາຍວ່າດ້ວຍການຄຸ້ມຄອງອາວຸດ ແລະ ທາດລະເບີດ (ສ້າງໃໝ່) ນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ກົດໝາຍວ່າດ້ວຍອົງການໄອຍະການທະຫານ (ປັບປຸງ) ເຊິ່ງນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໃນຄັ້ງນີ້. ນອກນີ້, ກຳມາທິການ ຍັງໄດ້ເປັນເຈົ້າການໃນການຄົ້ນຄວ້າສ້າງມະຕິຂອງຄະນະປະຈຳສະພາແຫ່ງຊາດ ທີ່ກ່ຽວພັນເຖິງວຽກງານໃນຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໄດ້ 3 ສະບັບ ແລະ ປະກອບສ່ວນໃນການປະກອບຄຳຄິດເຫັນຕໍ່ການສ້າງ ແລະ ປັບປຸງກົດໝາຍໃນຂົງເຂດອື່ນ ຈຳນວນ 19 ສະບັບ, ໃນນັ້ນ ນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໃນຄັ້ງນີ້ ຈຳນວນ 10 ສະບັບ;

- **ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ:** ໄດ້ຄົ້ນຄວ້າປະກອບຄຳເຫັນໃສ່ຮ່າງສົນທິສັນຍາສາກົນໃນຂົງເຂດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕາມການສະເໜີຂອງກະຊວງທີ່ກ່ຽວຂ້ອງ ແລະ ຄະນະປະຈຳສະພາແຫ່ງຊາດ ໄດ້ຈຳນວນ 2 ສະບັບ, ປະກອບສ່ວນເຂົ້າໃນການຄົ້ນຄວ້າຮ່າງມະຕິຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການຮັບຮອງເອົາຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃນໄລຍະທີ 1 ຂອງລັດຖະບານ; ຄົ້ນຄວ້າແກ້ໄຂຄຳຮ້ອງຂໍຄວາມເປັນທຳ ທີ່ພົວພັນເຖິງວຽກງານໃນຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໄດ້ຈຳນວນ 9 ເລື່ອງ; ນອກນີ້ໄດ້ປະກອບສ່ວນ ໃນການພິຈາລະນາຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດໃນຂົງເຂດອື່ນອອກເປັນມະຕິ ຄະນະປະຈຳສະພາແຫ່ງຊາດ ຈຳນວນ 73 ສະບັບ. ໃນນີ້, ວຽກງານລັດຖະບານ 19 ສະບັບ, ວຽກງານສານປະຊາຊົນສູງສຸດ 45 ສະບັບ, ອົງການກວດສອບແຫ່ງລັດ 1 ສະບັບ, ວຽກງານສະພາແຫ່ງຊາດ 8 ສະບັບ;

- **ດ້ານການຕິດຕາມກວດກາ:** ໄດ້ສືບຕໍ່ຕິດຕາມກວດກາ, ຊຸກຍູ້ຢ່າງໃກ້ສິດ ຕໍ່ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ຂອງລັດຖະບານໃນໄລຍະ 2 ເຫັນວ່າມີຄວາມຄືບໜ້າຕາມແຜນການທີ່ກຳນົດໄວ້, ຕິດຕາມກວດກາການປະຕິບັດລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ການປະຕິບັດໜ້າທີ່ການເມືອງຂອງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ໄປພ້ອມກັບການນຳເອົາກົດໝາຍ, ມະຕິຂອງສະພາແຫ່ງຊາດ, ຂອງຄະນະປະຈຳສະພາແຫ່ງຊາດ ທີ່ກ່ຽວຂ້ອງ ແລະ ບັນດາເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ລົງໄປເຜີຍແຜ່ແນະນຳຢູ່ບັນດາອົງການ, ກົມກອງ, ທ້ອງຖິ່ນຮາກຖານ ຂອງ 2 ກຳລັງ ປກຊ-ປກສ ໄດ້ຈຳນວນ 18 ຫົວໜ່ວຍກົມກອງ, ມີຜູ້ເຂົ້າຮ່ວມ 2.000 ກວ່າຄົນ;

ຜ່ານການຕິດຕາມກວດກາ, ສາມາດຕີລາຄາໄດ້ວ່າ: 2 ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບພວກເຮົາ ໄດ້ມີສະຕິໃນການເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ລະບຽບກົດໝາຍເຂັ້ມງວດ, ປະຕິບັດໜ້າທີ່ການເມືອງຂອງຕົນຕາມການມອບໝາຍດ້ວຍຄວາມຮັບຜິດຊອບສູງ, ອັນພົ້ນເດັ່ນແມ່ນ: ຍັງເປັນກຳລັງຫຼັກແຫຼ່ງໃນການຈັດຕັ້ງປະຕິບັດແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານຂອງພັກ, ເປັນກຳລັງຫຼັກແຫຼ່ງໃນການແກ້ໄຂບັນດາປະກົດການຫຍໍ້ທໍ້ໃນສັງຄົມໃຫ້ຫຼຸດໜ້ອຍຖອຍລົງ, ລົງກໍ່ສ້າງຮາກຖານການເມືອງ, ເປັນເຈົ້າການຊ່ວຍເຫຼືອປະຊາຊົນ ເມື່ອຖືກປະສົບໄພທຳມະຊາດ ແລະ ອື່ນໆ ເຮັດໃຫ້ປະຊາຊົນມີຄວາມເຊື່ອໝັ້ນຕໍ່ 2 ກຳລັງຂອງພວກເຮົານັບມື້ນັບສູງຂຶ້ນ.

ສຳລັບຄາດໝາຍສູ້ຊົນໃນຕໍ່ໜ້າ, ກຳມາທິການ ຈະໄດ້ສຸມໃສ່ ດັ່ງນີ້:

1. ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ມະຕິຂອງກອງປະຊຸມໃຫຍ່ຄັ້ງທີ IV ສະພາແຫ່ງຊາດ, ມະຕິຂອງສະພາແຫ່ງຊາດ, ຂອງຄະນະປະຈຳສະພາແຫ່ງຊາດ ແລະ ແຜນການເຄື່ອນໄຫວວຽກງານຂອງກຳມາທິການຕົນ ທີ່ໄດ້ວາງອອກໃຫ້ປະກົດຜົນເປັນຈິງ;

2. ຍົກສູງຄວາມຮັບຜິດຊອບໃນການເປັນເສນາທິການ ໃຫ້ຄະນະປະຈຳສະພາແຫ່ງຊາດ ປະຕິບັດ 3 ພາລະບົດບາດຂອງສະພາແຫ່ງຊາດໃນຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ມີຄຸນນະພາບ ແລະ ປະສິດທິຜົນດີຂຶ້ນກວ່າເກົ່າ;

3. ເພີ່ມທະວີໃນການຕິດຕາມກວດກາ, ຊຸກຍູ້ ການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດຂອງລັດຖະບານຢ່າງໃກ້ສິດ, ສືບຕໍ່ຕິດຕາມກວດກາການຈັດຕັ້ງເຜີຍແຜ່ແນະນຳ ແລະ ການປະຕິບັດລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ, ນັບທັງການປະຕິບັດໜ້າທີ່ການເມືອງຂອງກຳລັງປະກອບອາວຸດ ແລະ ພາກສ່ວນອື່ນ ທີ່ມີສ່ວນພົວພັນ ແລະ ເອົາໃຈໃສ່ຄົ້ນຄວ້າ, ແກ້ໄຂ ຄຳສະເໜີ, ຄຳຮ້ອງຂໍຄວາມເປັນທຳ ທີ່ພົວພັນເຖິງຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ຖືກຕ້ອງຕາມກົດໝາຍ;

4. ສືບຕໍ່ປັບປຸງກົງຈັກການຈັດຕັ້ງພາຍໃນກຳມາທິການ, ລະບົບກົນໄກປະສານງານລະຫວ່າງກຳມາທິການ ປກຊ-ປກສ ກັບກົງຈັກການຈັດຕັ້ງພາຍໃນສະພາແຫ່ງຊາດ, ສະພາປະຊາຊົນແຂວງ, ອົງການຈັດຕັ້ງຕ່າງໆທາງເບື້ອງລັດທັງສູນກາງ ແລະ ທ້ອງຖິ່ນ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ ໃຫ້ເໝາະສົມ ແລະ ມີຄວາມສະດວກ, ໂລ່ງລ່ຽນດີຂຶ້ນ;

5. ເພີ່ມທະວີການພົວພັນຮ່ວມມືຂົງເຂດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ກັບຕ່າງປະເທດ ແລະ ການຈັດຕັ້ງສາກົນຕາມການຕົກລົງເຫັນດີຂອງຄະນະປະຈຳສະພາແຫ່ງຊາດ ໂດຍສະເພາະຕໍ່ປະເທດເພື່ອນມິດຍຸດທະສາດ.

ພ້ອມນັ້ນ, ທ່ານຍັງໄດ້ໃຫ້ຮູ້ຕື່ມອີກວ່າ: ຜ່ານການພົບປະຜູ້ມີສິດເລືອກຕັ້ງ ແລະ ຕິດຕາມກວດກາ ເຫັນວ່າບັນຫາທີ່ປະຊາຊົນມີຄວາມກັງວົນ ແລະ ສະເໜີຫຼາຍທີ່ສຸດແມ່ນບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນທີ່ປະເທດພວກເຮົາກຳລັງປະເຊີນໜ້າໃນປະຈຸບັນ, ເປັນຕົ້ນແມ່ນບັນຫາໄພເງິນເຟີ້, ບັນຫາສິນຄ້າຂຶ້ນລາຄາ, ນັບທັງລາຄານ້ຳມັນເຊື້ອໄຟ, ບັນຫາປະກົດການຫຍໍ້ທໍ້ທີ່ເກີດຢູ່ໃນສັງຄົມຢ່າງຕໍ່ເນື່ອງ ໂດຍສະເພາະແມ່ນບັນຫາຢາເສບຕິດ, ການປຸ້ນຈີ້-ຊິງຊັບ, ງັດແງະ-ລັກຊັບ, ລັກພາຕົວ, ຄາດຕະກຳ, ອຸບັດເຫດ ແລະ ອື່ນໆ ເຊິ່ງເປັນສາເຫດພາໃຫ້ສັງຄົມບໍ່ມີຄວາມສະຫງົບ, ບັນຫາທັງໝົດທີ່ກ່າວມານັ້ນ, ປະຊາຊົນໄດ້ມີຄວາມເປັນຫ່ວງ ແລະ ສະເໜີຜ່ານມາຍັງສະພາແຫ່ງຊາດ ຮຽກຮ້ອງໃຫ້ລັດຖະບານ ດຳເນີນການແກ້ໄຂຢ່າງເລັ່ງດ່ວນ ເພື່ອເຮັດໃຫ້ສະພາບຜ່ອນຄາຍລົງ, ເຊິ່ງການແກ້ໄຂບັນຫາດັ່ງກ່າວນີ້, ຂ້າພະເຈົ້າກໍເຫັນວ່າ ລັດຖະບານ ກໍໄດ້ມີຄວາມເອົາໃຈໃສ່ແຕ່ຫົວທີ ໂດຍໄດ້ຍົກລະດັບເປັນວາລະແຫ່ງຊາດ ດັ່ງພວກເຮົາກຳລັງຈັດຕັ້ງປະຕິບັດຢູ່ໃນປະຈຸບັນ ຄື: ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ ແລະ ວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບ ເຊິ່ງເປັນຕົ້ນເຫດພາໃຫ້ເກີດປາກົດການຫຍໍ້ທໍ້ໃນສັງຄົມຂອງພວກເຮົາໃນປັດຈຸບັນ, ສ່ວນມາດຕະການແກ້ໄຂ ແລະ ຄາດໝາຍສູ້ຊົນໃນຕໍ່ໜ້າ ກໍຄືໃນປີ 2023, ລັດຖະບານໄດ້ວາງອອກໃນຫຼາຍມາດຕະການ ນັບທັງມາດຕະການປະຢັດທີ່ນຳມາພິຈາລະນາ ແລະ ຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໃນຄັ້ງນີ້ ແລະ ຈະກາຍເປັນມະຕິຂອງກອງປະຊຸມສະພາແຫ່ງຊາດ ເພື່ອເປັນບ່ອນອີງໃຫ້ແກ່ລັດຖະບານ ກໍຄືຂະແໜງການຕ່າງໆນຳໄປຈັດຕັ້ງຜັນຂະຫຍາຍໃຫ້ປະກົດຜົນເປັນຈິງ ແລະ ຈະເຮັດໃຫ້ບັນຫາຄວາມຫຍຸ້ງຍາກທີ່ກ່າວຂ້າງເທິງ ໄດ້ຮັບການແກ້ໄຂດີຂຶ້ນຢ່າງແນ່ນອນ.

ໃນຕອນທ້າຍ, ທ່ານປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຍັງໄດ້ມີຂໍ້ສະເໜີ ແລະ ຮຽກຮ້ອງມາຍັງອົງການຈັດຕັ້ງລັດ ແລະ ພາກສ່ວນກ່ຽວຂ້ອງຈົ່ງກຽມຈິດກຽມໃຈ ເພື່ອຈັດຕັ້ງເຊື່ອມຊຶມ ແລະ ນຳເອົາມະຕິກໍຄືບັນດາຄາດໝາຍໃນການພັດທະນາເສດຖະກິດ-ສັງຄົມໃນປີ 2023 ທີ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໃນຄັ້ງນີ້ ໄດ້ພິຈາລະນາ ແລະ ຮັບຮອງເອົາຢ່າງເປັນເອກະສັນແລ້ວນັ້ນ ໄປຈັດຕັ້ງປະຕິບັດເຂົ້າຂົງເຂດວຽກງານຂອງຕົນຮັບຜິດຊອບໃຫ້ປະກົດຜົນເປັນຈິງ ເພື່ອນຳພາປະເທດຊາດພວກເຮົາຫຼຸດພົ້ນອອກຈາກຄວາມຫຍຸ້ງຍາກດັ່ງກ່າວມາຂ້າງເທິງນັ້ນໄປໄດ້ດ້ວຍດີ.





## ສະຖາບັນ...

(ຕໍ່ຈາກໜ້າ 1)

ຈຸດປະສົງການຈັດກອງປະຊຸມຄັ້ງນີ້ ແມ່ນເພື່ອຮັບຟັງບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານປະຈຳປີ 2022 ແລະ ທິດທາງແຜນການ ປີ 2023 ຂອງສະຖາບັນ, ຮ່າງແຜນດຳເນີນງານການຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານທີ່ເປັນເສນາທິການ ແຕ່ປີ 2023-2025.

ກອງປະຊຸມ ໄດ້ຮັບຟັງການຜ່ານບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານປະຈຳປີ 2022 ແລະ ທິດທາງແຜນການ ປີ 2023 ຂອງສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ແລະ ຜ່ານປະຕິບັດວຽກງານຂອງແຜນພັດທະນາຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານເສນາທິການ ໄລຍະ 5 ປີ ຈາກທ່ານຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ. ຈາກນັ້ນ, ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມ ໄດ້ພ້ອມກັນຄົ້ນຄວ້າ ແລະ ປະກອບຄຳເຫັນ ໃຫ້ມີເນື້ອໃນເລິກເຊິ່ງ, ກວ້າງຂວາງ ແລະ ສອດຄ່ອງກັບຄວາມຕ້ອງການໃນການພັດທະນາວຽກງານຂອງສະຖາບັນ ເປັນຕົ້ນແມ່ນວຽກງານຄົ້ນຄວ້າຫົວຂໍ້ວິທະຍາສາດ, ຫົວຂໍ້ຫຼັກສູດ, ທັກສະຕ່າງໆ, ການເຝິກອົບຮົມການຍົກສູງຂີດຄວາມສາມາດ ແລະ ການສະໜອງຂໍ້ມູນ-ຂ່າວສານ ລ້ວນແຕ່ຕິດພັນກັບພາລະບົດບາດຂອງບັນດາກົງຈັກການຈັດຕັ້ງຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ.

ກອງປະຊຸມຍັງໄດ້ຮັບຟັງການໂອ້ລົມຕໍ່ກອງປະຊຸມຈາກທ່ານ ປອ. ນາງ ສູນທອນໄຊຍະຈັກ ຮອງປະທານສະພາແຫ່ງຊາດ.

(ສອນສັກ ວັນວິໄຊ)

## ຮອງປະທານ...

(ຕໍ່ຈາກໜ້າ 1)

ການຄັງສະຖາບັນການເງິນ ແລະ ການຕະຫຼາດການເງິນ ທີ່ພວມຢ້ຽມຢາມ ສປປລາວ ແຕ່ວັນທີ 21-24 ມັງກອນ.

ໃນການຢ້ຽມຂໍ່ານັບຄັ້ງນີ້, ທ່ານຮອງປະທານສະພາແຫ່ງຊາດ ໄດ້ສະແດງຄວາມຂໍ່ານັບຮັບຕ້ອນຄະນະຜູ້ແທນສະພາລາຊະດອນດັ່ງກ່າວ ແລະ ຕີລາຄາສູງຜົນການພົບປະ ລະຫວ່າງກຳມາທິການແຜນການ, ການເງິນ ແລະ ການກວດສອບຂອງສະພາແຫ່ງຊາດລາວ ແລະ ຄະນະຜູ້ແທນໄທ ເຊິ່ງເປັນການປະກອບສ່ວນສຳຄັນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບ ທີ່ເປັນມູນເຊື້ອ ລະຫວ່າງປະຊາຊົນ 2 ຊາດ ແລະ ໄດ້ສະແດງຄວາມຫວັງວ່າ 2 ອົງການນິຕິບັນຍັດຂອງ 2 ປະເທດ ຈະສືບຕໍ່ຮ່ວມມືນຳກັນ ເພື່ອເສີມສ້າງມິດຕະພາບ, ປະຕິບັດຕາມບົດບັນທຶກຂໍ້ຕົກລົງຂອງ 2 ອົງການນິຕິບັນຍັດທີ່ໄດ້ລົງນາມໂດຍປະທານຂອງ 2 ອົງການນິຕິບັນຍັດ ເມື່ອທ້າຍປີ 2022 ຜ່ານມາ ໃນໂອກາດທີ່ປະທານສະພາແຫ່ງຊາດລາວ ຢ້ຽມຢາມຣາຊະອານາຈັກໄທ ຢ່າງເປັນທາງການ.

ໃນວັນດຽວກັນ ທ່ານ ປອ. ລິເບີ ລີບົວປາວ ປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ ສະພາແຫ່ງຊາດລາວ ໄດ້ຕ້ອນຮັບ ແລະ ພົບປະສອງຝ່າຍກັບທ່ານ ສົມສັກ ຄຸນເງິນ ປະທານຄະນະກຳມາທິການການເງິນ, ການຄັງສະຖາບັນການເງິນ ແລະ ການຕະຫຼາດການເງິນ ສະພາຜູ້ແທນລາສະດອນ ແຫ່ງລາຊະອານາຈັກໄທ ໂດຍມີຮອງປະທານ, ຮອງເລຂາທິການ, ກຳມະການກຳມາທິການ, ພະນັກງານທີ່ກ່ຽວຂ້ອງຂອງສອງຝ່າຍ ເຂົ້າຮ່ວມຢ່າງພ້ອມພຽງ, ໃນການພົບປະ, ທັງສອງຝ່າຍໄດ້ຕີລາຄາສູງຕໍ່ສາຍພົວພັນມິດຕະພາບ ແລະ ການຮ່ວມມືລະຫວ່າງສອງອົງການນິຕິບັນຍັດຂອງລາວ ແລະ ໄທໃນໄລຍະຜ່ານມາ ແລະ ປຶກສາຫາລືທາງຮ່ວມມືໃນຕໍ່ໜ້າ ຕາມເນື້ອໃນບົດບັນທຶກຮ່ວມມືຂອງ 2 ຝ່າຍ. ພ້ອມດຽວກັນນີ້, ສອງຝ່າຍໄດ້ປຶກສາຫາລື ແລະ ແຈ້ງໃຫ້ກັນຊາບໂດຍຫຍໍ້ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ເປັນຕົ້ນແມ່ນຄາດໝາຍດ້ານເສດຖະກິດມະຫາພາກ, ງົບປະມານແຫ່ງລັດ, ແຜນເງິນຕາ, ສາເຫດທີ່ເຮັດເງິນເຟີ້, ມາດຕະການແກ້ໄຂຕ່າງໆໃນພາຍໜ້າ ແລະ ວຽກງານອື່ນໆອີກຈຳນວນໜຶ່ງ ທີ່ສອງຝ່າຍໃຫ້ຄວາມສົນໃຈຮ່ວມກັນ.

## ກຳມາທິການວຽກງານ...

(ຕໍ່ຈາກໜ້າ 1)

ກາດຟົດຟື້ນ ແລະ ມີຜົນສຳເລັດຢ່າງຈົບງາມ ໂດຍການເປັນປະທານຂອງທ່ານ ສຸບັນ ສະວະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ເຂົ້າຮ່ວມມີທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ, ຜູ້ຊີ້ນຳວຽກງານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ມີທ່ານເລຂາທິການສະພາແຫ່ງຊາດ, ບັນດາທ່ານຮອງປະທານກຳມາທິການ, ກຳມະການຂອງກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ ແລະ ແຂກຖືກເຊີນ.

ທັງນີ້, ເພື່ອປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຕາມທີ່ໄດ້ກຳນົດໄວ້ໃນມະຕິຂອງຄະນະປະຈຳສະພາແຫ່ງຊາດ ແລະ ການເຄື່ອນໄຫວຂອງກຳມາທິການວຽກງານສະມາຊິກສະພາແຫ່ງຊາດ; ເພື່ອສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ວາງທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ຂອງກຳມາທິການວຽກງານສະມາຊິກສະພາແຫ່ງຊາດ; ເພື່ອເຜີຍແຜ່ນິຕິກຳທີ່ສຳຄັນຈຳນວນໜຶ່ງຂອງຄະນະປະຈຳສະພາແຫ່ງຊາດ, ປຶກສາຫາລື ແລະ ຖອດຖອນບົດຮຽນວຽກງານອື່ນທີ່ຢູ່ໃນຄວາມຮັບຜິດຊອບຂອງກຳມາທິການ.

ໃນພິທີ, ທ່ານ ຄຳໃບ ດຳລັດ ໄດ້ມີຄຳເຫັນເພື່ອຮັບປະກັນການເຄື່ອນໄຫວວຽກງານຂອງກຳມາທິການ ແລະ ສະເໜີໃຫ້ເພີ່ມທະວີຄວາມເອົາໃຈໃສ່ໃນບາງວຽກຕົ້ນຕໍ ດັ່ງນີ້: ວຽກງານກົງຈັກການຈັດຕັ້ງ: ເອົາໃຈໃສ່ຄົ້ນຄວ້າໂຄງປະກອບກົງຈັກ ແລະ ບຸກຄະລາກອນຂອງສະພາແຫ່ງຊາດແລະສະພາປະຊາຊົນຂັ້ນແຂວງ ໂດຍປຽບທຽບກັບການຈັດຕັ້ງປະຕິບັດວຽກງານຕົວຈິງ ເພື່ອປັບປຸງໃນຕໍ່ໜ້າ; ການຄຸ້ມຄອງວຽກງານສະມາຊິກສະພາ: ເອົາໃຈໃສ່ຕິດຕາມ, ກວດກາຕໍ່ການເຄື່ອນໄຫວຂອງສະມາຊິກສະພາແຫ່ງຊາດ, ປະສານສົມທົບກັບຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຄຸ້ມຄອງການເຄື່ອນໄຫວຂອງສະມາຊິກສະພາປະຊາຊົນຂັ້ນແຂວງ ໃຫ້ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ມີຄວາມໜັກແໜ້ນທາງດ້ານຄຸນທາດການເມືອງ, ບໍ່ສວຍໃຊ້ເວທີສະພາ ມີຄຳເຫັນທີ່ຂັດກັບແນວທາງ ເຮັດໃຫ້ຄົນບໍ່ດີນຳໄປເປັນບ່ອນອີງໂຈມຕີ, ແບ່ງແຍກຄວາມສາມັກຄີພາຍໃນຂອງປະຊາຊົນບັນດາເຜົ່າ. ພ້ອມນັ້ນ, ກໍເອົາໃຈໃສ່ເກັບກຳຊີວະປະຫວັດ, ຂໍ້ມູນຕ່າງໆ, ຜົນງານການປະຕິບັດສິດ ແລະ ໜ້າທີ່ຂອງສະມາຊິກສະພາແຫ່ງຊາດ, ສືບຕໍ່ຄົ້ນຄວ້ານະໂຍບາຍຕ່າງໆ ຕໍ່ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ບົນພື້ນຖານລະບຽບກົດໝາຍ, ຫຼັກການລວມ ແລະ ສອດຄ່ອງຕາມຄວາມເປັນຈິງ; ວຽກງານການປະເມີນ: ເອົາໃຈໃສ່ກະກຽມນິຕິກຳ ແລະ ເອກະສານຂໍ້ມູນຕ່າງໆ ໂດຍສະເພາະນິຕິກຳທີ່ພົວພັນກັບສິດ ແລະ ໜ້າທີ່ຂອງບຸກຄະລາກອນດັ່ງກ່າວ, ການເກັບກຳຜົນງານການ ເຄື່ອນໄຫວໃນແຕ່ລະໄລຍະໃຫ້ຈະແຈ້ງ, ຢູ່ທ້ອງຖິ່ນ ກໍຕ້ອງເບິ່ງການເຄື່ອນໄຫວຂອງກົງຈັກກ່ຽວຂ້ອງ. ພ້ອມນີ້ ກໍເອົາໃຈ ໃສ່ວຽກງານການປະເມີນຕໍ່ຜູ້ມາລາຍງານ, ຊີ້ແຈງ ແລະ ຕອບຄຳຊັກຖາມ ໃນກອງປະຊຸມຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ມີຄວາມຖືກຕ້ອງ; ວຽກງານເລືອກຕັ້ງ: ເອົາໃຈໃສ່ຄົ້ນຄວ້າໂຄງປະກອບ ແລະ ບຸກຄະລາກອນຂອງສະພາຊຸດປັດຈຸບັນ ເພື່ອໃຫ້ເຫັນບັນຫາຄວນຈະປັບປຸງໃນຊຸດຕໍ່ໄປ ແລະ ສ້າງປຶ້ມຄູ່ມືຮັບໃຊ້ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ເພື່ອເປັນບ່ອນອີງໃຫ້ແກ່ການກະກຽມ ແລະ ດຳເນີນການເລືອກຕັ້ງ ໃຫ້ມີປະສິດທິຜົນ ແລະ ຄົ້ນຄວ້າແຕ່ຫົວທີໂຄງປະກອບບຸກຄະລາກອນ ຂອງຜູ້ຈະອອກສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ III, ຄົ້ນຄວ້າ, ປັບປຸງກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ແລະ ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ສືບຕໍ່ເອົາ ໃຈໃສ່ເພີ່ມທະວີວຽກງານການສ້າງຄວາມເຂັ້ມແຂງ ເປັນຕົ້ນ: ການເຝິກອົບຮົມໃຫ້ແກ່ສະມາຊິກສະພາ ແລະ ເສນາທິການຂອງກຳມາທິການ ເພື່ອຍົກລະດັບຄວາມຮູ້ຄວາມສາມາດໃຫ້ມີຄວາມເລິກເຊິ່ງ ເພື່ອໃຫ້ເຂັ້ມແຂງຂຶ້ນເປັນກ້າວໆ; ສືບຕໍ່ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳ ຕາມຄວາມຮັບຜິດຊອບຂອງກຳມາທິການ ປະສານສົມທົບໃນການເຄື່ອນໄຫວວຽກງານການຕ່າງປະເທດ ເພື່ອປະກອບສ່ວນໃນການປະຕິບັດແນວທາງການຕ່າງປະເທດຂອງພັກ ກໍຄືສະພາແຫ່ງຊາດ ແລະ ແລກປ່ຽນບົດຮຽນ ເຊິ່ງກັນແລະກັນ ກັບບັນດາລັດຖະສະພາໃນລະດັບພາກພື້ນ ແລະ ສາກົນ ໂດຍສະເພາະກັບ ສສ.ຫວຽດນາມ ກ່ຽວກັບວຽກງານບຸກຄະລາກອນ; ສະເໜີໃຫ້ບັນດາທ່ານທີ່ເປັນກຳມະການຂອງກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ທັງສູນກາງ ແລະ ທ້ອງຖິ່ນ ເອົາໃຈໃສ່ລົງເລິກບັນດາວຽກງານໃນຂົງເຂດຄວາມຮັບຜິດ ຊອບຂອງຕົນ ແລະ ຂອງກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ເພື່ອກຳໄດ້ບັນຫາ, ພ້ອມນັ້ນ ກໍໃຫ້ເອົາໃຈໃສ່ໃນລະບົບສ່ອງແສງລາຍງານໃຫ້ກຳມາທິການແຕ່ລະເດືອນຕາມວຽກງານຕົວຈິງ; ເສນາທິການ ເປັນເຈົ້າການ ແລະ ມີຄວາມຮັບຜິດຊອບສູງໃນການຊ່ວຍກຳມາທິການ ຄົ້ນຄວ້າ, ວາງແຜນ, ສະຫຼຸບຕີລາຄາດ້ານຕ່າງໆ.

## ທູດອິນໂດເນເຊຍ...

(ຕໍ່ຈາກໜ້າ 1)

(ສພຊ) ວັນທີ 20 ມັງກອນ 2023 ທີ່ຫ້ອງຮັບແຂກສະພາແຫ່ງຊາດ, ທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມອຳລາຂອງທ່ານ ປອ. Pratito Soeharyo ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສາທາລະນະລັດ ອິນໂດເນເຊຍ ປະຈຳ ສປປລາວ ໃນໂອກາດທີ່ສຳເລັດການປະຕິບັດໜ້າທີ່ການທູດ ຢູ່ ສປປລາວ.

ໂອກາດດັ່ງກ່າວ, ທ່ານ ສົມມາດ ພົລເສນາ ໄດ້ສະແດງຄວາມຊົມເຊີຍຕໍ່ຜົນສຳເລັດໃນການປະຕິບັດໜ້າທີ່ວຽກງານການທູດ ຕະຫຼອດໄລຍະ 4 ປີກວ່າທີ່ຜ່ານມາ, ປະກອບສ່ວນອັນສຳຄັນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມ ລະຫວ່າງ ສປປລາວ ແລະ ສ.ອິນໂດເນເຊຍ ໂດຍສະເພາະການສະເຫຼີມສະຫຼອງຄົບຮອບ 65 ປີ ແຫ່ງການສ້າງຕັ້ງສາຍພົວພັນການທູດ ລະຫວ່າງ ສປປລາວ ແລະ ສ.ອິນໂດເນເຊຍ ໃນປີ 2022 ຜ່ານມາ. ພ້ອມນີ້, ທ່ານ ສົມມາດ ພົລເສນາ ຍັງໄດ້ສະແດງຄວາມຂອບໃຈ ຜ່ານທ່ານເອກອັກຄະລັດຖະທູດ ໄປຍັງລັດຖະບານ ແລະ ປະຊາຊົນອິນໂດເນເຊຍ ທີ່ໄດ້ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫຼືອແກ່ ສປປລາວ ຕະຫຼອດມາ ເປັນຕົ້ນການພັດທະນາຊັບພະຍາກອນມະນຸດ, ເສດຖະກິດ-ການຄ້າ, ການລົງທຶນ ແລະ ອື່ນໆ ເຊິ່ງໄດ້ປະກອບສ່ວນອັນສຳຄັນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງ ສປປລາວ. ພ້ອມທັງອວຍພອນໃຫ້ທ່ານເອກອັກຄະລັດຖະທູດ ຈົ່ງເດີນທາງກັບຄືນປະເທດ ດ້ວຍຄວາມສະຫວັດດີພາບ ແລະ ປະສົບຜົນສຳເລັດໃນໜ້າທີ່ວຽກງານອັນໃໝ່.

ທ່ານເອກອັກຄະລັດຖະທູດອິນໂດເນເຊຍ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນຂອງທ່ານຮອງປະທານສະພາແຫ່ງຊາດ ພ້ອມທັງໃຫ້ຄຳໝັ້ນສັນຍາວ່າຈະສືບຕໍ່ປະກອບສ່ວນເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມື ລະຫວ່າງສອງປະເທດ ລາວ ແລະ ອິນໂດເນເຊຍ, ຫວັງວ່າສະພາແຫ່ງຊາດລາວ ກໍຄື ລັດຖະບານລາວ ຈະສືບຕໍ່ໃຫ້ການຮ່ວມມືກັບທ່ານເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມຂອງ ສ.ອິນໂດເນເຊຍ ຜູ້ໃໝ່ ເພື່ອພ້ອມກັນສືບຕໍ່ພັດທະນາສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມ ລະຫວ່າງ ສອງປະເທດ ໃຫ້ໄດ້ຮັບການຂະຫຍາຍຕົວຍິ່ງໆຂຶ້ນ.

# ຖະແຫຼງຂ່າວການດຳເນີນ ກອງປະຊຸມສະໄໝສາມັນເທື່ອທີ 4 ສພຂ ບໍລິຄຳໄຊ



(ສພຊ) ໃນຕອນບ່າຍຂອງວັນທີ 23 ມັງກອນ 2023 ທ່ານ ນາງ ຟອງສະໝຸດ ພົງວິຈິດ ເລຂາທິການສະພາປະຊາຊົນແຂວງບໍລິຄຳໄຊ ໄດ້ຕາງໜ້າຄະນະປະຈຳສະພາປະຊາຊົນແຂວງ (ສພຂ) ຖະແຫຼງຂ່າວຕໍ່ສື່ມວນຊົນກ່ຽວກັບການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງບໍລິຄຳໄຊ ຊຸດທີ II ເຊິ່ງຈະໄດ້ໄຂຂຶ້ນຢ່າງເປັນທາງການໃນຕອນເຊົ້າວັນທີ 31-2 ກຸມພາ 2023 ທີ່ຫ້ອງປະຊຸມ ສພຂ ບໍລິຄຳໄຊ.

ກອງປະຊຸມຄັ້ງນີ້, ຈະໄດ້ຄົ້ນຄວ້າພິຈາລະນາ, ຮັບຮອງເອົາບັນຫາສຳຄັນພື້ນຖານຂອງແຂວງ ດັ່ງນີ້: ບົດລາຍງານຂອງເຈົ້າແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານທີ່ພົ້ນເດັ່ນເປັນຈຸດສຸມບູລິມະສິດຂອງແຂວງ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023; ບົດລາຍງານຂອງຫົວໜ້າພະແນກແຜນການ ແລະ ການລົງທຶນແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນການລົງທຶນຂອງລັດ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023; ບົດລາຍງານຂອງພະແນກການເງິນແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023; ບົດລາຍງານຂອງອົງການກວດສອບປະຈຳພາກກາງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2022, ທິດທາງແຜນການ ປະຈຳປີ 2023 ແລະ ບົດລາຍງານ ຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານ ປະຈຳປີ 2021 ແລະ ການຈັດຕັ້ງປະຕິບັດຄຳແນະນຳຂອງອົງການກວດສອບໃນປີຜ່ານມາ; ບົດລາຍງານຂອງອົງການກວດກາພັກ-ລັດ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2022, ທິດທາງແຜນການ ປະຈຳປີ 2023 ແລະ ການແກ້ໄຂຜົນການກວດສອບ ປີຜ່ານມາ; ບົດລາຍງານຂອງອົງການໄອຍະການປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ປະ ຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023; ບົດລາຍງານຂອງສານປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023; ບົດລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງ ສພຂ ບໍລິຄຳໄຊ ຊຸດທີ II; ບົດລາຍງານຂອງຄະນະຮັບຜິດຊອບ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໃນໄລຍະຜ່ານມາ ແລະ ທິດທາງແກ້ໄຂໃນຕໍ່ໜ້າ; ບົດລາຍງານຂອງພະແນກພາຍໃນແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ, ວຽກງານກໍ່ສ້າງຮາກຖານ ຕິດພັນກັບວຽກງານສາມສ້າງ ໃນໄລຍະປີ 2020-2022 ແລະ ທິດທາງແຜນການ ໄລຍະປີ 2023-2025; ຮັບຟັງການປະກອບຄຳເຫັນຂອງອົງການແນວລາວສ້າງແຂວງ ຕໍ່ບົດລາຍງານການເຄື່ອນໄຫວວຽກງານປະ ຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງສະພາປະຊາຊົນແຂວງບໍລິຄຳໄຊ ຊຸດທີ II ທັງຈະພິຈາລະນາ, ຮັບຮອງເອົາຮ່າງຂໍ້ຕົກລົງຂອງເຈົ້າແຂວງ ແຂວງບໍລິຄຳໄຊ ຈຳນວນ 3 ສະບັບ, ໃນນັ້ນ ປັບປຸງ 1 ສະບັບ ແລະ ສ້າງໃໝ່ ຈຳນວນ 2 ສະບັບ ຄື: ຮ່າງຂໍ້ຕົກລົງວ່າດ້ວຍການປະເມີນລາຄາທີ່ດິນ ຂອງແຂວງ (ສະບັບປັບປຸງ); ຮ່າງຂໍ້ຕົກລົງວ່າດ້ວຍກອງທຶນທານຸເຄາະເພື່ອຊ່ວຍເຫຼືອສັງຄົມ (ສະບັບສ້າງໃໝ່) ແລະ ຮ່າງຂໍ້ຕົກລົງວ່າດ້ວຍນະໂຍບາຍ ແລະ ລາຄາຫົວໜ່ວຍທົດແທນຄ່າເສຍຫາຍຜົນກະທົບ ຕໍ່ຊັບສິນຈາກການສຳປະທານກໍ່ສ້າງໂຮງງານເຫຼັກກ້າ ບ້ານຫາດໄຄ້ ແລະ ບ້ານທ່າບົກ ເມືອງທ່າພະບາດ ແຂວງບໍລິຄຳໄຊ (ສະບັບສ້າງໃໝ່).

ພ້ອມນີ້, ກອງປະຊຸມຍັງຈະໄດ້ຮັບຟັງການອະທິບາຍ, ຊີ້ແຈງຈາກການນຳຂອງແຂວງ, ພະແນກການທີ່ກ່ຽວຂ້ອງຈຳນວນໜຶ່ງ ຕໍ່ຄຳຊັກຖາມຂອງບັນດາທ່ານສະມາຊິກສະພາປະຊາຊົນແຂວງ.

ບັນດາເນື້ອໃນທີ່ນຳມາຄົ້ນຄວ້າພິຈາລະນາຮັບຮອງໃນກອງປະຊຸມຄັ້ງນີ້ ລ້ວນແລ້ວແຕ່ມີຄວາມໝາຍຄວາມສຳຄັນຍິ່ງ ໃນການກຳນົດພາລະບົດບາດ, ສິດ ແລະ ໜ້າທີ່ຂອງ ສພຂ, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານຂອງແຂວງ ສະນັ້ນ, ຕາງໜ້າຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງ ຂໍຖືໂອກາດເຊີນຊວນມາຍັງພາກສ່ວນທີ່ກ່ຽວຂ້ອງ, ອົງການຈັດຕັ້ງສັງຄົມ, ປະຊາຊົນບັນດາເຜົ່າຊາວແຂວງບໍລິຄຳໄຊ ຈົ່ງໄດ້ພ້ອມກັນເຂົ້າຮ່ວມ ໃຫ້ການຕິດຕາມສະໜັບສະໜູນ ເຮັດໃຫ້ກອງປະຊຸມຄັ້ງນີ້ ໄດ້ຮັບຜົນສຳເລັດຕາມຄາດໝາຍທີ່ວາງໄວ້.

ໃນເວລາດຳເນີນກອງປະຊຸມ ຍັງໄດ້ຖ່າຍທອດສົດບາງເນື້ອໃນທີ່ສຳຄັນຈຳນວນໜຶ່ງ ຜ່ານສະຖານີວິທະຍຸແຂວງບໍລິຄຳໄຊ ແລະ ເປີດກວ້າງການປະກອບຄຳຄິດ-ຄຳເຫັນ, ຄຳສະເໜີ ຈາກພໍ່ແມ່ປະຊາຊົນບັນດາເຜົ່າ ມາຍັງກອງປະຊຸມ ຜ່ານໂທລະສັບສາຍດ່ວນ ໝາຍເລກ 054 156 ໂດຍບໍ່ເສຍຄ່າບໍລິການ.

# ປະເມີນຜົນການຈັດຕັ້ງປະຕິບັດວຽກງານ ຂອງພະນັກງານ-ລັດຖະກອນ ປະຈຳປີ 2022



(ສພຊ) ກອງປະຊຸມປະເມີນຜົນການຈັດຕັ້ງປະຕິບັດວຽກງານຂອງພະນັກງານ-ລັດຖະກອນ ປະຈຳປີ 2022 ສະພາປະຊາຊົນແຂວງໄຊຍະບູລີ ໄດ້ຈັດຂຶ້ນໃນວັນທີ 16 ມັງກອນ 2023 ທີ່ຫ້ອງປະຊຸມຫ້ອງວ່າການແຂວງ ໂດຍການເຂົ້າຮ່ວມຂອງທ່ານ ເພັງນິລັນ ຄຳພັນເພັງ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ, ມີບັນດາຄະນະປະຈຳສະພາປະຊາຊົນແຂວງ, ມີຄະນະພະແນກ, ຫົວໜ້າ-ຮອງຫົວໜ້າຂະແໜງ ພ້ອມດ້ວຍພະນັກງານ-ລັດຖະກອນ ແລະ ຄະນະທີມງານຂອງແຂວງເຂົ້າຮ່ວມ.

ໃນກອງປະຊຸມ, ທ່ານ ນາງ ວິລະພອນ ທອງພິມ ຮອງປະທານສະພາປະຊາຊົນແຂວງ ໄດ້ລາຍງານຜົນການຈັດຕັ້ງປະຕິບັດວຽກງານປະເມີນຜົນພະນັກງານ-ລັດຖະກອນ ປະຈຳປີ 2022 ເຊິ່ງທ່ານໄດ້ໃຫ້ຮູ້ວ່າ: ຜ່ານການຈັດຕັ້ງປະຕິບັດວຽກງານການປະເມີນຜົນປະຕິບັດວຽກງານຂອງລັດຖະກອນ ປະຈຳປີ 2022 ແມ່ນໄດ້ເລີ່ມຈັດຕັ້ງປະຕິບັດມາແຕ່ວັນທີ 31 ພະຈິກ 2022 ບົນພື້ນຖານການຈັດຕັ້ງປະຕິບັດຕາມບົດບາດກ້າວ ແລະ ຂັ້ນຕອນຂອງການປະເມີນຕາມ 4 ບາດກ້າວ ໂດຍລວມແລ້ວສະພາປະຊາຊົນແຂວງ ມີພະນັກງານ-ລັດຖະກອນ 56 ທ່ານ ຍິງ 18 ທ່ານ ປະກອບມີ 3 ຄະນະກຳມະການ, 1 ຄະນະເລຂາທິການ ແລະ ມີ 10 ຂະແໜງການ, ໃນນີ້ ຂະແໜງຂຶ້ນກັບ 3 ຄະນະກຳມະການ ມີ 6 ຂະແໜງ, ຂຶ້ນກັບຄະນະເລຂາທິການ ມີ 4 ຂະແໜງ ຜ່ານການຄົ້ນຄວ້າຂອງຄະນະນຳສະພາປະຊາຊົນແຂວງ ຕາມມາດຖານເງື່ອນໄຂ ມີພະນັກງານ-ລັດຖະກອນປະຈຳການ ໄດ້ເຂົ້າຮ່ວມການປະເມີນຕົວຈິງ 46 ທ່ານ ຍິງ 17 ທ່ານ ບໍ່ໄດ້ປະເມີນ 10 ທ່ານ ຍິງ 1 ທ່ານ (ໃນນີ້ການນຳລະດັບສູງ 1 ທ່ານ, ຈາກກຳລັງປະກອບອາວຸດ 2 ທ່ານ, ໄປຮຽນຕໍ່ 2 ທ່ານ, ຍົກຍ້າຍມາໃໝ່ 1 ທ່ານ, ພະນັກງານຝຶກງານ 95% 1 ທ່ານ, ປະຈຳການຢູ່ເຂດເລືອກຕັ້ງເມືອງ 3 ທ່ານ ແລະ ພະນັກງານສັນຍາແຮງງານ 2 ທ່ານ).

ໂອກາດດຽວກັນນີ້, ທ່ານ ເພັງນິລັນ ຄຳພັນ ໄດ້ໂອ້ລົມຕໍ່ທີ່ປະຊຸມ ໂດຍທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານໃນການນຳພາ-ຊີ້ນຳຂອງຄະນະພັກຄະນະນຳສະພາປະຊາຊົນແຂວງ ທີ່ໄດ້ຕັດສິນໃຈບຸກບືນເຮັດສຳເລັດໜ້າທີ່ການຈັດຕັ້ງມອບໝາຍໃຫ້ ເຊິ່ງໄດ້ສະແດງອອກໃນການປະເມີນຜົນໃນຄັ້ງນີ້ ເຫັນວ່າໄດ້ມີພະນັກງານ-ລັດຖະກອນໄດ້ປະເພດດີຫຼາຍ ແລະ ດີ ບໍ່ມີພະນັກງານເສຍທາດຂາດຄຸນ. ພ້ອມນີ້, ທ່ານຍັງໄດ້ຮຽກຮ້ອງໃຫ້ຄະນະພັກຄະນະນຳສະພາປະຊາຊົນແຂວງ ຈົ່ງໄດ້ສືບຕໍ່ເອົາໃຈໃສ່ສຶກສາອົບຮົມການເມືອງແນວຄິດໃຫ້ສະມາຊິກພັກພະນັກງານ-ລັດຖະກອນພາຍໃນໃຫ້ສູງຂຶ້ນຕື່ມ; ສ້າງໄດ້ຄວາມສາມັກຄີພາຍໃນ, ພາຍນອກໃຫ້ແໜ້ນແຟ້ນການແບ່ງຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານຂອງແຕ່ລະສະຫາຍຕ້ອງໃຫ້ຖືກຕ້ອງສອດຄ່ອງກັບຄວາມຮູ້, ຄວາມສາມາດທີ່ໄດ້ຮຽນມາ; ເອົາໃຈໃສ່ປາກົດການຫຍໍ້ທໍ້ໃນໝູ່ພະນັກງານສ້າງໃຫ້ເຂົາເຈົ້າມີຄວາມບຸກບືນຕໍ່ໜ້າທີ່ວິຊາສະເພາະ ເພື່ອເຮັດສຳເລັດໜ້າທີ່ການຈັດຕັ້ງມອບໝາຍໃຫ້.

ຕອນທ້າຍ, ປະທານກອງປະຊຸມຍັງໄດ້ປະດັບຫຼຽນໄຊ ແຮງງານຊັ້ນ I, II, III, ຫຼຽນກາແຮງງານ ແລະ ໃບຍ້ອງຍໍລັດຖະບານໃຫ້ພະນັກງານ-ລັດຖະກອນຜູ້ທີ່ມີຜົນງານປະກອບສ່ວນເຂົ້າໃນວຽກງານກໍ່ສ້າງຮາກຖານການເມືອງພັດທະນາຊົນນະບົດຮອບດ້ານແກ້ໄຂຄວາມທຸກຍາກ ຕິດພັນກັບວຽກງານ 3 ສ້າງ ແລະ ຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ຈຳນວນ 34 ທ່ານ ໃນນີ້, ຫຼຽນໄຊແຮງງານຊັ້ນ I ມີ 8 ທ່ານ, ຫຼຽນໄຊແຮງງານຊັ້ນ II ມີ 3 ທ່ານ, ຫຼຽນໄຊແຮງງານຊັ້ນ III ມີ 6 ທ່ານ, ຫຼຽນກາແຮງງານ 6 ທ່ານ ແລະ ໃບຍ້ອງຍໍລັດຖະບານ 11 ທ່ານ.

(ອິນທີ ຂຽວສີຟ້າ)



# ພິທີມອບ-ຮັບຫຼຽນ ແລະ ໃບຍ້ອງຍໍໃຫ້ແກ່ພະນັກງານ-ລັດຖະກອນ ໃນຂະບວນແຂ່ງຂັນຮັກຊາດ ແລະ ພັດທະນາ



(ສພຊ) ໃນວັນທີ 17 ມັງກອນ 2023 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງວຽງຈັນ ໄດ້ຈັດພິທີມອບຫລຽນໄຊ, ຫລຽນກາແຮງງານ ແລະ ໃບຍ້ອງຍໍໃຫ້ພະນັກງານ-ລັດຖະກອນ ຜູ້ທີ່ມີຜົນງານດີເດັ່ນຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ໂດຍການເປັນປະທານຂອງທ່ານ ບຸນສອນ ເຜີດລາວັນ ປະທານສະພາປະຊາຊົນແຂວງ, ເຂົ້າຮ່ວມມີບັນດາທ່ານຮອງປະທານ, ຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ພ້ອມດ້ວຍພະນັກງານ-ວິຊາການ ພາຍໃນສະພາປະຊາຊົນເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີແມ່ນຮັບຟັງການຂຶ້ນຜ່ານຄຳແນະນຳກ່ຽວກັບການຈັດຕັ້ງ-ຜັນຂະຫຍາຍເນື້ອໃນຂໍ້ແຂ່ງຂັນຮັກຊາດ ແລະ ພັດທະນາ ແລະ ຜ່ານດຳລັດເລກທີ 158/ປປທ, ລົງວັນທີ 14/09/2022, ດຳລັດເລກທີ 367/ນຍ, ລົງວັນທີ 14/09/2022; ຈາກນັ້ນ, ຜ່ານລາຍຊື່ຍ້ອງຍໍຜູ້ທີ່ມີຜົນງານດີເດັ່ນ ມີຄື: ຫລຽນໄຊແຮງງານ ຊັ້ນ II ຈຳນວນ 1 ທ່ານ, ຫລຽນໄຊແຮງງານ ຊັ້ນ III ຈຳນວນ 11 ທ່ານ, ຫລຽນກາແຮງງານ ຈຳນວນ 15 ທ່ານ 15 ຫລຽນ, ໃບຍ້ອງຍໍລັດຖະບານ ຈຳນວນ 13 ທ່ານ ແລະ ໃບຍ້ອງຍໍຂອງເຈົ້າແຂວງແຂວງວຽງຈັນ 10 ທ່ານ.

ໂອກາດດັ່ງກ່າວ, ທ່ານ ບຸນສອນ ເຜີດລາວັນ ປະທານສະພາປະຊາຊົນແຂວງ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຜົນງານທີ່ພະນັກງານ-ລັດຖະກອນຂອງສະພາປະຊາຊົນແຂວງທີ່ສາມາດຍາດມາໄດ້ວຽກງານແຂ່ງຂັນຍ້ອງຍໍເປັນວຽກງານໜຶ່ງທີ່ມີຄວາມສຳຄັນຫຼາຍໃນການປະກອບສ່ວນກະຕຸກຊຸກຍູ້ໃຫ້ພະນັກງານ-ລັດຖະກອນທີ່ມີຄວາມຫ້າວຫັນປະກອບສ່ວນສຸມສະຕິປັນຍາ, ເຫື່ອແຮງ ແລະ ເອົາໃຈໃສ່ປະຕິບັດໜ້າທີ່ວຽກງານຕາມການມອບໝາຍ.

ພ້ອມດຽວກັນນັ້ນ, ຍັງໄດ້ເນັ້ນໃຫ້ຜູ້ທີ່ໄດ້ຮັບການຍ້ອງຍໍໃນຄັ້ງນີ້ ກໍຄືພະນັກງານ-ລັດຖະກອນຂອງສະພາປະຊາຊົນແຂວງທຸກຄົນຕ້ອງມີລະບຽບວິໄນ ທີ່ເຂັ້ມງວດໃນການຈັດຕັ້ງປະຕິບັດວຽກງານຕ່າງໆ, ມີແບບແຜນທີ່ລະອຽດປະຕິບັດວຽກງານຕ່າງໆໃຫ້ທັນການ, ໃຫ້ມີການປະສານສົມທົບກັບຂະແໜງການແຂວງ, ເມືອງໃຫ້ກົມກຽວດີຂຶ້ນກວ່າເກົ່າ ແລະ ຮັດແໜ້ນຄວາມສາມັກຄີຊ່ວຍເຫຼືອເຊິ່ງກັນແລະກັນ, ທີ່ສຳຄັນທີ່ສຸດແມ່ນຕິດຕາມກວດກາການເຮັດວຽກງານໃຫ້ຖືກຕາມລະບຽບວິໄນໃຫ້ຖືກຕ້ອງ ທັງນີ້, ກໍເພື່ອໃຫ້ການຈັດຕັ້ງວຽກງານສາມາດເດີນແມ່ນແລ່ນສະດວກໄດ້ດີຂຶ້ນເປັນກ້າວ.



# ຂຶ້ນແຜນກຳນົດພະນັກງານນຳພາ-ຄຸ້ມຄອງຂອງ ສພຂ ສາລະວັນ



(ສພຊ) ຕອນເຊົ້າຂອງວັນທີ 10 ມັງກອນ 2023 ຢູ່ທີ່ສະພາປະຊາຊົນແຂວງ (ສພຂ) ສາລະວັນ ໄດ້ຈັດກອງປະຊຸມການຂຶ້ນແຜນກຳນົດພະນັກງານນຳພາ-ຄຸ້ມຄອງຂອງ ສພຂ ສາລະວັນ ໂດຍການເປັນປະທານກອງປະຊຸມຂອງສະຫາຍ ນາງ ສູນໄຕ ໄຊຍະແສງ ຮອງປະທານ ສພຂ ສາລະວັນ ທັງເປັນເລຂາຄະນະພັກຮາກຖານ ສພຂ ຕາງໜ້າໃຫ້ແກ່ຄະນະພັກຂັ້ນເທິງ; ເຂົ້າຮ່ວມມີຄະນະປະຈຳ ສພຂ, ຄະນະກຳມະການ, ຄະນະເລຂາທິການ, ມີຕາງໜ້າຈາກອົງການກວດກາລັດແຂວງ, ຄະນະຈັດຕັ້ງແຂວງ ແລະ ພະແນກພາຍໃນແຂວງ ພ້ອມດ້ວຍພະນັກງານ-ລັດຖະກອນ ພາຍໃນ ສພຂ ສາລະວັນ ເຂົ້າຮ່ວມຄັ້ງນີ້.

ສະຫາຍ ນາງ ສູນໄຕ ໄຊຍະແສງ ໄດ້ກ່າວເປີດກອງປະຊຸມວ່າ: ການຂຶ້ນແຜນກຳນົດພະນັກງານນຳພາ-ຄຸ້ມຄອງຄັ້ງນີ້ ແມ່ນເປັນວຽກໜຶ່ງທີ່ມີຄວາມສຳຄັນ ແລະ ຕ້ອງໄດ້ຈັດຕັ້ງປະຕິບັດ ພາຍຫຼັງກອງປະຊຸມໃຫຍ່ຂອງພັກແຕ່ລະຂັ້ນສຳເລັດ ທັງນີ້, ເພື່ອຮັບປະກັນການຫັນວຽກພະນັກງານ ດຳເນີນຕາມລະບຽບແບບແຜນວິທີເຮັດວຽກ ເພື່ອຕອບສະໜອງໜ້າທີ່ການເມືອງຂອງພັກ-ລັດ ໃນສະເພາະໜ້າ ແລະ ຍາວນານ; ເປັນການຫັນຍຸດທະສາດ ກ່ຽວກັບວຽກງານພະນັກງານເປັນອັນລະອຽດ, ສ້າງໂຄງການສັງລວມພື້ນຖານໃຫ້ແກ່ການສ້າງແຜນ, ກໍ່ສ້າງ-ບຳລຸງ, ຄາດຄະເນສັບຊ້ອນ ແລະ ຈັດວາງພະນັກງານ ເຂົ້າໃນຕຳແໜ່ງນຳພາ-ຄຸ້ມຄອງແຕ່ລະຂັ້ນ ແນໃສ່ຮັບປະກັນລັກສະນະສືບທອດປ່ຽນແທນຕໍ່ເນື່ອງ ເພື່ອກຽມບຸກຄະລາກອນ ໃນລັກສະນະເປີດກວ້າງ, ຕອບສະໜອງທາງດ້ານຈຳນວນ, ຄຸນນະພາບ, ໂຄງປະກອບບຸກຄະລາກອນໃຫ້ຄົບຊຸດຕາມຄວາມຮຽກຮ້ອງຕ້ອງການຂອງບັນດາຕຳແໜ່ງງານນຳພາ-ຄຸ້ມຄອງແຕ່ລະຂັ້ນ.

ໃນທີ່ປະຊຸມໄດ້ຮັບຟັງການເຜີຍແຜ່ເອກະສານຂອງກົມການເມືອງສູນກາງພັກ ສະບັບເລກທີ 030 ແລະ 032 ລົງວັນທີ 3 ມັງກອນ 2018 ວ່າດ້ວຍການສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ແລະ ມາດຕະຖານຕຳແໜ່ງງານຂອງພະນັກງານນຳພາ-ຄຸ້ມຄອງ, ທີ່ເນັ້ນໃສ່ 4 ໜ້າວຽກໃຫຍ່ຄື: ຈຸດປະສົງ ແລະ ຄວາມໝາຍຄວາມສຳຄັນຂອງການສ້າງແຜນກຳນົດພະນັກງານ; ກຳແໜ້ນບັນດາທິດຊີ້ນຳຂອງກົມການເມືອງສູນກາງພັກ ແລະ ຫຼັກການ; ມາດຕະຖານລວມຂອງຕຳແໜ່ງບໍລິຫານລັດ; ມາດຕະຖານແຕ່ລະຕຳແໜ່ງ ປະເພດ 1 ຫາ ປະເພດ 6 ເຜີຍແຜ່ໂດຍທ່ານ ສົມພອນ ແສງສຸລິຈັນ ຮອງເລຂາທິການ ສພຂ ສາລະວັນ.

ກອງປະຊຸມຍັງໄດ້ດຳເນີນການທາບທາມໃຊ້ສິດຂອງຕົນປ່ອນບັດຄັດເລືອກເອົາພະນັກງານນຳພາ-ຄຸ້ມຄອງ ລວມ 3 ຮອບ ເຊິ່ງກອງປະຊຸມຄັ້ງນີ້ດຳເນີນໄປເຖິງວັນທີ 11 ມັງກອນ 2023 ຈຶ່ງສຳເລັດ.

(ດີລຳພົນ ພົມມະຈັນ)

# ສະພາປະຊາຊົນແຂວງອັດຕະປື ອວຍພອນວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 74 ປີ



(ສພຊ) ໃນວັນທີ 18 ມັງກອນ 2023 ສະພາປະຊາຊົນແຂວງອັດຕະປື ໄດ້ເຂົ້າອວຍພອນ ແລະ ມອບກະຕ່າຂອງຂວັນ ໃຫ້ແກ່ຄະນະພັກ-ຄະນະກອງບັນຊາການທະຫານແຂວງ ເນື່ອງໃນໂອກາດວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 74 ປີ (20/1/1949-20/1/2023) ນຳໂດຍທ່ານ ສຸກສຳລານ ໄຊຍະແສງ ຮອງປະທານສະພາປະຊາຊົນແຂວງ, ປະທານຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ພ້ອມດ້ວຍຄະນະ ໂດຍການຕ້ອນຮັບຂອງທ່ານ ພັອ. ບຸນຈັນ ສີທາວົງ ຫົວໜ້າການທະຫານກອງບັນຊາການທະຫານແຂວງ ພ້ອມດ້ວຍຄະນະ.

ໂອກາດດັ່ງກ່າວ, ທ່ານ ສຸກສຳລານ ໄຊຍະແສງ ຕາງໜ້າໃຫ້ສະພາປະຊາຊົນແຂວງ ແລະ ປະຊາຊົນລາວຊາວແຂວງອັດຕະປື ໃນນາມເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ ໄດ້ກ່າວສະແດງຄວາມຊົມເຊີຍ ແລະ ເຊີດຊູນ້ຳໃຈຮັກຊາດ, ນ້ຳໃຈເສຍສະຫຼະ ເພື່ອຊາດ ເພື່ອປະຊາຊົນ ແລະ ການປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃຫ້ມີຄວາມສະຫງົບສຸກ, ສີວິໄລຂອງບັນດາສະຫາຍນາຍ ແລະ ພົນທະຫານ ທົ່ວກອງທັບປະຊາຊົນປະຕິວັດລາວເວົ້າລວມ ເວົ້າສະເພາະພາຍໃນແຂວງອັດຕະປື ທີ່ເຮັດໜ້າທີ່ພາລະກິດປົກປັກຮັກສາເຂດນ້ຳແດນດິນ, ເປັນເສົາຄໍ້າທີ່ແຂງແກ່ນໃຫ້ແຂວງອັດຕະປື ກໍຄືໃຫ້ກັບປະເທດຊາດ ຕະຫລອດໄລຍະຜ່ານມາ ແລະ ສຳລັບສະພາປະຊາຊົນແຂວງ ກໍກະກຽມຈັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II ໃນມໍ່ໆນີ້ ເພື່ອຈະໄດ້ຄົ້ນຄວ້າພິຈາລະນາຮັບຮອງເອົາບັນຫາສຳຄັນພື້ນຖານຂອງທ້ອງຖິ່ນຕາມພາລະບົດບາດທີ່ໄດ້ ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ. ດັ່ງນັ້ນ, ອີກເທື່ອໜຶ່ງເນື່ອງໃນໂອກາດຂໍ່ານັບຮັບຕ້ອນ ແລະ ສະເຫຼີມສະຫຼອງວັນສ້າງຕັ້ງກອງທັບປະຊາຊົນປະຕິວັດລາວ ຄົບຮອບ 74 ປີນີ້ ຂໍອວຍພອນໃຫ້ຄະນະພັກ-ຄະນະບັນຊາ ພ້ອມດ້ວຍພະນັກງານ-ນັກຮົບທຸກສະຫາຍຈົ່ງມີສຸຂະພາບແຂງແຮງ, ມີຄວາມເຂັ້ມແຂງ ພ້ອມກັນສືບຕໍ່ເຮັດໜ້າທີ່ທີ່ພັກ-ລັດ ໄດ້ມອບໝາຍໃຫ້ ໃຫ້ສຳເລັດໜ້າທີ່ຕາມການມອບໝາຍດ້ວຍໝາກຜົນອັນສູງ.

(ວິນັດ)

# ຄະນະຜູ້ແທນຂັ້ນສູງແຂວງເຊກອງ ອວຍພອນປີໃໝ່ ສສ.ຫວຽດນາມ



(ສພຊ) ໃນລະຫວ່າງວັນທີ 12-13 ມັງກອນຜ່ານມາ, ຄະນະຜູ້ແທນຂັ້ນສູງແຂວງເຊກອງ ສປປລາວ ນຳໂດຍສະຫາຍ ດົງເຜັດ ພະຍິນ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງເຊກອງ ໄດ້ນຳພາຄະນະເຂົ້າຢ້ຽມຂໍ່ານັບ ແລະ ອວຍພອນຄະນະພັກ-ຄະນະນຳຂອງ ສສ.ຫວຽດນາມ ຄື: ແຂວງເທືອທຽນເຫວ້ ແລະ ນະຄອນດານັງ ເນື່ອງໃນໂອກາດບຸນປີໃໝ່ປະຈຳຊາດຫວຽດນາມ ໂດຍການຕ້ອນຮັບອັນອົບອຸ່ນ ແລະ ສະໜິດສະໜົມ ຈາກສະຫາຍ ຟານ ງ໊ອກ ທໍ້ ຮອງເລຂາພັກແຂວງ ແຂວງເທືອທຽນເຫວ້, ສະຫາຍ ຫວງຽນ ກວາງ ຕວນ ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ ແລະ ທ່ານ ເຈິ່ນ ເຟືອກ ເຊີນ ຮອງປະທານສະພາປະຊາຊົນ ນະຄອນດານັງ ສສ.ຫວຽດນາມ ພ້ອມດ້ວຍການນຳພັກ-ລັດ ກໍຄືປະຊາຊົນບັນດາເຜົ່າຂອງແຂວງ ແລະ ນະຄອນດັ່ງກ່າວ.

ໂອກາດອັນສະຫງ່າລາສີນີ້, ສະຫາຍ ດົງເຜັດ ພະຍິນ ໄດ້ກ່າວວ່າ: ຄະນະພັກ-ຄະນະນຳ ກໍຄືປະຊາຊົນສອງຊາດລາວ-ຫວຽດນາມມີມູນເຊື້ອຄວາມສາມັກຄີຮັກແພງຢ່າງສະໜິດແໜ້ນ ແລະ ຮ່ວມມືແບບພິເສດຮອບດ້ານມາແຕ່ດົນນານ ໂດຍສະເພາະແຂວງເຊກອງ ກັບບັນດາແຂວງພາກກາງຂອງ ສສ.ຫວຽດນາມ ເວົ້າລວມ ເວົ້າສະເພາະແຂວງເຊກອງກັບແຂວງເທືອທຽນເຫວ້ ແລະ ນະຄອນດານັງ. ພ້ອມນັ້ນ, ທ່ານກໍໄດ້ກ່າວຄຳອວຍພອນເນື່ອງໃນໂອກາດທີ່ທົ່ວພັກ-ລັດ ແລະ ປະຊາຊົນຊາວຫວຽດນາມ ເວົ້າສະເພາະແມ່ນແຂວງເທືອທຽນເຫວ້ ແລະ ນະຄອນດາໜັງ ພວມຫ້າງຫາກະກຽມສະເຫຼີມສະຫຼອງບຸນປີໃໝ່ປະຈຳຊາດຫວຽດນາມ ຄສ. 2023 ຕາງໜ້າຄະນະພັກ-ອົງການປົກຄອງ ແລະ ປະຊາຊົນບັນດາເຜົ່າແຂວງເຊກອງ ຂໍຝາກຄວາມຢ້ຽມຢາມຖາມຂ່າວ ແລະ ຄຳອວຍພອນໄຊອັນປະເສີດມາຍັງສະຫາຍ ຟານ ງ໊ອກ ທໍ້, ສະຫາຍ ຫວງຽນ ກວາງ ຕວນ ແລະສະຫາຍເຈິ່ນເຟືອກເຊີນ ພ້ອມດ້ວຍການນຳພັກ-ລັດ ກໍຄືປະຊາຊົນບັນດາເຜົ່າເຊື້ອຊາດຫວຽດນາມທຸກຖ້ວນໜ້າ ຈົ່ງມີສຸຂະພາບເຂັ້ມແຂງ, ມີພະລານາໄມສົມບູນ, ມີຄວາມຜາສຸກ ແລະ ປະສົບຜົນສຳເລັດໃນພາລະກິດຂອງຕົນ ພ້ອມກັນເພີ່ມພູນຄູນສ້າງສາຍພົວພັນມິດຕະພາບທີ່ຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານຂອງສອງຊາດລາວ-ຫວຽດນາມ ໃຫ້ໝັ້ນຄົງຂະໜົງແກ່ນ ແລະ ນັບມື້ໄດ້ຮັບການເສີມຂະຫຍາຍ ຢ່າງບໍ່ຢຸດຢັ້ງ.

ໂອກາດດຽວກັນ, ສະຫາຍ ຟານ ງ໊ອກ ທໍ້ ແລະສະຫາຍເຈິ່ນເຟືອກເຊີນໄດ້ຕາງໜ້າຄະນະນຳຂັ້ນສູງຂອງແຂວງ ເທືອທຽນເຫວ້ ແລະ ນະຄອນດາໜັງ ແລະ ປະຊົນບັນດາເຜົ່າເຊື້ອຊາດຫວຽດນາມ ສະແດງຄວາມຂອບໃຈ ແລະ ຕີລາຄາສູງຕໍ່ການນຳແຂວງເຊກອງ ທີ່ມາຢ້ຽມຢາມ ແລະ ອວຍພອນປີໃໝ່ ປະຈຳຊາດຫວຽດນາມປີນີ້ ເຊິ່ງສະແດງເຖິງໄມຕີຈິດມິດຕະພາບອັນດູດດື່ມ, ຄວາມສະໜິດສະໜົມ, ຄວາມສາມັກຄີແບບພິເສດລະຫວ່າງການນຳພັກ-ລັດສອງຊາດລາວ-ຫວຽດນາມເວົ້າລວມ ເວົ້າສະເພາະກໍຄືແຂວງເຊກອງແຂວງເທືອທຽນເຫວ້ ແລະ ນະຄອນດານັງ ໃຫ້ໝັ້ນຄົງຂະໜົງແກ່ນຍິ່ງໆຂຶ້ນ.

(ນາລີວັນ)

# ທາບທາມຮ່າງນິຕິກຳ ໃຕ້ກົດໝາຍທີ່ຈະນຳເຂົ້າພິຈາລະນາ ໃນກອງປະຊຸມສະໄໝສາມັນເທື່ອທີ 4



(ສພຊ) ໃນວັນທີ 17 ມັງກອນ 2023 ທີ່ເມືອງທ່າພະບາດ ແຂວງບໍລິຄຳໄຊ, ສະພາປະຊາຊົນແຂວງບໍລິຄຳໄຊ ໄດ້ດຳເນີນກອງປະຊຸມສຳມະນາທາບທາມຮ່າງນິຕິກຳໃຕ້ກົດໝາຍ ໂດຍການເປັນປະທານຂອງທ່ານ ປອ. ສຸວັນນີ ໄຊຊະນະ ປະທານສະພາປະຊາຊົນແຂວງ, ທ່ານ ພັທ. ສົມສິດ ແສງອາພອນ ເຈົ້າເມືອງໆທ່າພະບາດ; ມີບັນດາທ່ານ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງເມືອງ, ສະມາຊິກສະພາປະຊາຊົນແຂວງ, ພະແນກການທີ່ກ່ຽວຂ້ອງ ແລະ ພະນັກງານ-ລັດຖະກອນຂອງສະພາປະຊາຊົນແຂວງບໍລິຄຳໄຊເຂົ້າຮ່ວມ.

ບັນດາຮ່າງນິຕິກຳທີ່ນຳມາທາບທາມໃນຄັ້ງນີ້ ປະກອບມີ 3 ສະບັບຄື: ຮ່າງຂໍ້ຕົກລົງຂອງເຈົ້າແຂວງວ່າດ້ວຍການຄຸ້ມຄອງກອງທຶນທານຸເຄາະ, ຮ່າງຂໍ້ຕົກລົງຂອງເຈົ້າແຂວງວ່າດ້ວຍການປະເມີນຫົວໜ່ວຍລາຄາທີ່ດິນ ພາຍໃນແຂວງ, ຮ່າງຂໍ້ຕົກລົງຂອງເຈົ້າແຂວງວ່າດ້ວຍນະໂຍບາຍ ແລະ ລາຄາຫົວໜ່ວຍທົດແທນຄ່າເສຍຫາຍຈາກຜົນກະທົບຂອງໂຄງການກໍ່ສ້າງໂຮງງານຫຼອມເຫຼັກກ້າເຂດບ້ານຫາດໄຄ ແລະ ບ້ານທ່າບົກ ເຊິ່ງບັນດາທ່ານສະມາຊິກສະພາປະຊາຊົນແຂວງ ແລະ ຜູ້ແທນກອງປະຊຸມໄດ້ເຊີດຊູຄວາມຮັບຜິດຊອບສູງ ໃນການຄົ້ນຄວ້າ, ປະກອບຄຳຄິດຄຳເຫັນຢ່າງມີເຫດຜົນ, ມີຈຸດສຸມ, ເລິກເຊິ່ງ ຕໍ່ກັບບັນດາຮ່າງນິຕິກຳ ທີ່ນຳມາຄົ້ນຄວ້າຢູ່ໃນກອງປະຊຸມສຳມະນາຄັ້ງນີ້, ໃຫ້ມີເນື້ອໃນຄົບຖ້ວນ, ສົມບູນ, ມີປະສິດທິພາບ, ປະສິດທິຜົນ, ສ່ອງແສງເຖິງແນວທາງຂອງພັກ, ສອດຄ່ອງກັບກົດໝາຍ ແລະ ແທດເໝາະກັບສະພາບຕົວຈິງຂອງການພັດທະນາເສດຖະກິດ-ສັງຄົມໃນປັດຈຸບັນ ແລະ ຍາວນານ ເພື່ອຮັບປະກັນພາຍຫຼັງພິຈາລະນາຮັບຮອງ ໃຫ້ສາມາດຈັດຕັ້ງປະຕິບັດໄດ້ ຢ່າງເປັນຮູບປະທຳ.

(ນາງ ໂສລະຢ່າ ໄຊຍະວົງ)

# ກອງປະຊຸມສະໄໝສາມັນເທື່ອທີ 4 ສພຂ ອຸດົມໄຊ ຊຸດທີ II ຈະຈັດຂຶ້ນໃນຕົ້ນເດືອນກຸມພາ



(ສພຊ) ຕອນເຊົ້າຂອງວັນທີ 25 ມັງກອນ 2023 ທ່ານ ນາງ ວັນສີ ພວງມະໄລ ເລຂາທິການສະພາປະຊາຊົນແຂວງອຸດົມໄຊ ໄດ້ຖະແຫຼງຂ່າວການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ (ສພຂ) ອຸດົມໄຊ ຊຸດທີ II ທ່ານໃຫ້ຮູ້ວ່າ: ປະຕິບັດຕາມມາດຕາ 59 ຂອງກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບປີ 2020 ສພຂ ອຸດົມໄຊ ໃນຖານະເປັນອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນຊາວແຂວງອຸດົມໄຊ ຈະໄດ້ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂຶ້ນໃນວັນທີ 1-3 ກຸມພາ 2023 ຢູ່ທີ່ສະໂມສອນແຂວງ (ບ້ານເຈງ) ເປັນເວລາ 3 ເຕັມ.

ກອງປະຊຸມໃນຄັ້ງນີ້, ຈະສຸມໃສ່ຄົ້ນຄວ້າ, ພິຈາລະນາ, ຮັບຮອງເອົາບັນຫາສຳຄັນພື້ນຖານຕ່າງໆຂອງແຂວງ ເຊັ່ນ: ບົດລາຍງານໂດຍສັງເຂບ ກ່ຽວກັບວຽກງານການບໍລິຫານລັດ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023; ບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023; ບົດລາຍງານການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ແລະ ບົດລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂ ຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ; ບົດລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ, ຕິດພັນກັບການແກ້ໄຂປາກົດການຫຍໍ້ທໍ້ພາຍໃນແຂວງ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023; ບົດລາຍງານການຮັບມືໄພພິບັດ ແລະ ການຟື້ນຟູໄພພິບັດໃນຕໍ່ໜ້າ; ບົດລາຍງານການຈັດຕັ້ງປະຕິບັດການສ້າງ, ປັບປຸງນິຕິກຳໃຕ້ກົດໝາຍຂອງແຂວງໃນໄລຍະ 2 ປີຜ່ານມາ ແລະ ທິດທາງແຜນການແຕ່ປີ 2023-2025; ບົດລາຍງານການຄຸ້ມຄອງ ແລະ ການແກ້ໄຂບັນຫາໂຮງແຮມ, ຮ້ານອາຫານ ແລະ ຮ້ານບັນເທີງ ພາຍໃນແຂວງອຸດົມໄຊ ໃຫ້ຖືກຕ້ອງຕາມກົດໝາຍ, ລະບຽບ ແລະ ຫັນເຂົ້າສູ່ຄຸນນະພາບ; ພິຈາລະນາ ແລະ ຮັບຮອງເອົາບຸກຄະລາກອນຂອງອົງການປົກແຂວງຈຳນວນໜຶ່ງ ແລະ ບົດລາຍງານແຜນການນຳໃຊ້ກອງທຶນທາງ; ບົດລາຍງານການເຄື່ອນໄຫວວຽກງານຂອງອົງການກວດສອບປະຈຳພາກເໜືອ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ແລະ ຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2021; ບົດລາຍງານການເຄື່ອນໄຫວວຽກງານຂອງອົງການກວດກາລັດແຂວງ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ແລະ ການກວດກາຕາມຜົນການກວດສອບ ປະຈຳປີ 2020; ບົດລາຍງານການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານ ຂອງອົງການໄອຍະການປະຊາຊົນແຂວງ ປະ ຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023; ບົດລາຍງານການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານຂອງສານປະຊາຊົນແຂວງ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023; ບົດລາຍງານການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານຂອງ ສພຂ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ແລະ ບົດລາຍງານຜົນການຕິດຕາມກວດກາຜົນກະທົບຈາກໂຄງການພັດທະນາຢູ່ ແຂວງອຸດົມໄຊ. ພ້ອມນັ້ນ, ໃນວາລະການດຳກອງປະຊຸມ ສສຊ-ສສຂ ຈະໄດ້ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົານິຕິກຳໃຕ້ກົດໝາຍ 4 ສະບັບ ແລະ ບົດປະກອບຄຳເຫັນຕໍ່ບົດລາຍງານຕ່າງໆຂອງອົງການປົກຄອງແຂວງຈຳນວນໜຶ່ງ.

ດັ່ງນັ້ນ, ຈຶ່ງຂໍເຊີນຊວນບັນດາອົງການຈັດຕັ້ງພັກ-ລັດ ອົງການຈັດຕັ້ງສັງຄົມທຸກພາກສ່ວນ ພະນັກງານ, ທະຫານ, ຕຳຫຼວດ, ນັກທຸລະກິດ ຕະຫຼອດຮອດພໍ່ແມ່ປະຊາຊົນບັນດາເຜົ່າໃນທົ່ວແຂວງອຸດົມໄຊ ຈົ່ງຕິດຕາມຂ່າວສານທາງສະຖານີວິທະຍຸ-ໂທລະພາບແຂວງ, ຖ່າຍທອດສົດທາງເຟສບຸກ, ເຟຈ໌ສະພາປະຊາຊົນແຂວງອຸດົມໄຊ ແລະ ສາມາດມີຄຳຄິດຄຳເຫັນ ຫຼື ຄຳສະເໜີຜ່ານທາງໂທລະສັບສາຍດ່ວນ ໝາຍເລກ (081 156 ໂດຍບໍ່ເສຍຄ່າ) ຕາມໂມງລັດຖະການ ຫຼື ຈະສົ່ງເປັນລາຍລັກອັກສອນມາທີ່ສະພາປະຊາຊົນແຂວງອຸດົມໄຊ ຕັ້ງຢູ່ບ້ານນາເລົາ ເມືອງໄຊ ແຂວງອຸດົມໄຊ ເພື່ອຮັບເອົາຄຳຄິດເຫັນ ແລະ ຄຳສະເໜີຂອງປະຊາຊົນບັນດາເຜົ່າ ມາຍັງກອງປະຊຸມກ່ຽວກັບບັນຫາທີ່ພົວພັນເຖິງການຄຸ້ມຄອງບໍລິຫານລັດຂອງສະມາຊິກອົງການປົກຄອງແຂວງ, ການພັດທະນາເສດຖະກິດ-ສັງຄົມຂອງແຂວງ, ການພັດທະນາທີ່ມີຜົນກະທົບຕໍ່ສັງຄົມ, ສິ່ງແວດລ້ອມ ແລະ ບັນຫາອື່ນໆ.

(ສີແຫວງ ສີບຸນເຮືອງ)




# ກົດໝາຍ ວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ

ຕໍ່ຈາກສະບັບກ່ອນ...

**ມາດຕາ 23 ການນຳເອົາອາວຸດກິລາ ເຂົ້າ-ອອກ ສປປ ລາວ**

ການນຳເອົາອາວຸດກິລາ ເຂົ້າ ສປປ ລາວ ຂອງຕ່າງປະເທດ ເພື່ອເຂົ້າຮ່ວມໃນການ ຝຶກຊ້ອມ ແລະ ແຂ່ງຂັນ, ວາງສະແດງ ຫຼື ກິດຈະກຳອື່ນ ຕ້ອງສະເໜີຜ່ານ ກະຊວງການຕ່າງປະເທດ ເພື່ອນຳສະເໜີຕໍ່ກະຊວງປ້ອງກັນປະເທດ ພິຈາລະນາອະນຸຍາດ ບົນພື້ນຖານປະສານສົມທົບກັບ ກະຊວງປ້ອງກັນຄວາມສະຫງົບ ພາຍຫຼັງສຳເລັດແລ້ວ ຕ້ອງໄດ້ກວດກາເອົາອາວຸດກິລາທີ່ນຳເຂົ້ານັ້ນ ອອກ ສປປ ລາວ ໃຫ້ຄົບຖ້ວນ ຫຼື ປະຕິບັດຕາມການຕົກລົງຂອງສອງລັດທີ່ກ່ຽວຂ້ອງ.

ການນຳເອົາອາວຸດກິລາ ອອກ ສປປ ລາວ ເພື່ອເຂົ້າຮ່ວມໃນການຝຶກຊ້ອມ ແລະ ແຂ່ງຂັນ, ວາງສະ ແດງ ຫຼື ກິດຈະກຳອື່ນ ຢູ່ຕ່າງປະເທດ ຕ້ອງສະເໜີຂໍອະນຸຍາດນຳອົງການທີ່ມີສິດອຳນາດຂອງປະເທດທີ່ກ່ຽວຂ້ອງ ໂດຍຜ່ານກະຊວງການຕ່າງປະເທດ ແລະ ປະຕິບັດຕາມກົດໝາຍ ຂອງປະເທດທີ່ກ່ຽວຂ້ອງພາຍຫຼັງສຳເລັດຕ້ອງນຳກັບຄືນປະເທດ ໃຫ້ຄົບຖ້ວນຕາມຈຳນວນ.

ສຳລັບ ການນຳເຂົ້າ ປືນກິລາ ແລະ ລູກກະສຸນ ທຸກປະເພດ ຕ້ອງໄດ້ຂໍອະນຸຍາດນຳກະຊວງປ້ອງກັນຄວາມສະຫງົບ ຍົກເວັ້ນປືນກິລາທີ່ເປັນອາວຸດເສິກ ຕ້ອງໄດ້ຂໍອະນຸຍາດນຳກະຊວງປ້ອງກັນປະເທດ.

**ໝວດທີ 4**
**ການຄຸ້ມຄອງອາວຸດພື້ນເມືອງ**

**ມາດຕາ 24 ການຄຸ້ມຄອງອາວຸດພື້ນເມືອງ**

ກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ຄຸ້ມຄອງອາວຸດພື້ນເມືອງ ເປັນຕົ້ນ ປືນແກ໋ບ, ປືນເພີງ, ປືນປະດິດ ແລະ ປືນດັດແປງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດ້ວຍການ ເກັບກູ້ຄືນ, ຂຶ້ນບັນຊີ, ທຳລາຍ, ນຳໃຊ້ ຫຼື ວາງສະແດງ ຕາມລະບຽບການ.

**ມາດຕາ 25 ການນຳໃຊ້ອາວຸດພື້ນເມືອງ**

ອາວຸດພື້ນເມືອງ ໃຫ້ນຳໃຊ້ເຂົ້າໃນການ ປະຕິບັດໜ້າທີ່ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຮັກສາຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ປ້ອງກັນ ຊີວິດ, ສຸຂະພາບ, ຊັບສິນຂອງລັດ, ລວມໝູ່ ແລະ ບຸກຄົນ ລວມທັງການນຳໃຊ້ເຂົ້າໃນ ການຜະລິດ, ການດຳລົງຊີວິດປະຈຳວັນ ແລະ ບໍ່ໃຫ້ນຳໃຊ້ໃນການກະທຳທີ່ເປັນການລະເມີດກົດໝາຍ.

**ພາກທີ III**
**ການຄຸ້ມຄອງວັດຖຸລະເບີດ**
**ໝວດທີ 1**
**ປະເພດວັດຖຸລະເບີດ**

**ມາດຕາ 26 ປະເພດວັດຖຸລະເບີດ**

ປະເພດວັດຖຸລະເບີດ ມີ ດັ່ງນີ້:

1. ວັດຖຸລະເບີດທາງການທະຫານ;
2. ວັດຖຸລະເບີດທາງອຸດສາຫະກຳ.

**ມາດຕາ 27 ວັດຖຸລະເບີດທາງການທະຫານ**

ວັດຖຸລະເບີດທາງການທະຫານ ແມ່ນ ວັດຖຸລະເບີດທີ່ນຳໃຊ້ເຂົ້າໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

**ມາດຕາ 28 ວັດຖຸລະເບີດທາງອຸດສາຫະກຳ**

ວັດຖຸລະເບີດທາງອຸດສາຫະກຳ ແມ່ນວັດຖຸລະເບີດທີ່ນຳໃຊ້ເຂົ້າໃນການກໍ່ສ້າງໂຄງລ່າງພື້ນຖານ, ຂຸດຄົ້ນແຮ່ທາດ, ສະເຫຼີມສະຫຼອງ ແລະ ວຽກງານອື່ນ.

**ໝວດທີ 2**
**ການຄຸ້ມຄອງວັດຖຸລະເບີດທາງການທະຫານ**

**ມາດຕາ 29 ການຄຸ້ມຄອງວັດຖຸລະເບີດທາງການທະຫານໃນກຳລັງປ້ອງກັນຊາດ**

ກະຊວງປ້ອງກັນປະເທດ ເປັນຜູ້ຄຸ້ມຄອງວັດຖຸລະເບີດໃນຂົງເຂດວຽກງານປ້ອງກັນຊາດ ດ້ວຍການ ຄວບຄຸມ, ຕິດຕາມກວດກາ ກ່ຽວກັບການ ຄົ້ນຄວ້າປະດິດ, ຜະລິດ, ຈັດຊື້, ເກັບຮັກສາ, ນຳເຂົ້າ, ສົ່ງອອກ, ນຳຜ່ານ, ປະກອບ, ນຳໃຊ້ ແລະທຳລາຍວັດຖຸລະເບີດທີ່ເສື່ອມຄຸນນະພາບຢ່າງເຂັ້ມງວດ.

**ມາດຕາ 30 ການຄຸ້ມຄອງວັດຖຸລະເບີດທາງການທະຫານໃນກຳລັງປ້ອງກັນຄວາມສະຫງົບ**

ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ຄຸ້ມຄອງວັດຖຸລະເບີດ ໃນຂົງເຂດວຽກງານປ້ອງກັນຄວາມສະຫງົບ ດ້ວຍການ ຄວບຄຸມ, ຕິດຕາມ ກວດກາ ກ່ຽວກັບການ ຈັດຊື້, ເກັບຮັກສາ, ນຳເຂົ້າ, ປະກອບ, ນຳໃຊ້ ແລະ ທຳລາຍ ວັດຖຸລະເບີດ ທີ່ເສື່ອມຄຸນນະພາບ ຢ່າງເຂັ້ມງວດ.

**ມາດຕາ 31 ການນຳໃຊ້ວັດຖຸລະເບີດທາງການທະຫານ**

ວັດຖຸລະເບີດທາງການທະຫານ ໃຫ້ນຳໃຊ້ເຂົ້າໃນວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການປະຕິບັດໜ້າທີ່ ປົກປັກຮັກສາ ເອກະລາດ, ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນ ລວມທັງ ນ່ານນ້ຳ ແລະ ນ່ານຟ້າ, ຄວາມສະຫງົບທາງດ້ານການເມືອງ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

**ໝວດທີ 3**
**ການຄຸ້ມຄອງວັດຖຸລະເບີດທາງອຸດສາຫະກຳ**

**ມາດຕາ 32 ການຄຸ້ມຄອງວັດຖຸລະເບີດທາງອຸດສາຫະກຳ**

ກະຊວງປ້ອງກັນປະເທດ ເປັນຜູ້ຄຸ້ມຄອງວັດຖຸລະເບີດ

ອ່ານຕໍ່ສະບັບໜ້າ...




## ວິທີເຮັດວຽກ

"ໄປໜ້າໃຫ້ເບິ່ງຫຼັງ" ດັ່ງນັ້ນ, ໃນຄໍລຳນີ້ ຂ້າພະເຈົ້າໃນນາມກອງບັນນາທິການ ຈຶ່ງໄດ້ນຳເອົາບົດຮຽນເກົ່າໆ ໃນປຶ້ມ "ການແກ້ໄຂວິທີເຮັດວຽກ" ພິມເທື່ອທີສາມ ຂອງສຳນັກພິມຈຳໜ່າຍ (ລາວຮັກຊາດ) ມານຳສະເໜີໃໝ່ ເພື່ອໃຫ້ຜູ້ອ່ານໄດ້ທົບທວນພ້ອມໆກັນອີກຄັ້ງ ໂດຍສະເພາະ ພາກທີ 2 ຕ້ອງແກ້ໄຂປ່ຽນແປງວິທີເຮັດວຽກຂອງພັກ ດັ່ງຕໍ່ໄປນີ້:

ພັກເຮົາເສຍສະຫຼະຕໍ່ສູ້, ສາມັກຄີນຳພາປະຊາຊົນຍາດຊີງເອົາຄວາມເປັນເອກະພາບ ແລະ ເອກະລາດຂອງຊາດ, ວຽກງານທີ່ເຮັດມາ ແມ່ນມີຜົນສຳເລັດຢ່າງງົດງາມ.

ແຕ່ວ່າ ຖ້າພະນັກງານແຕ່ລະຄົນ, ສະມາຊິກແຕ່ລະຄົນ ເຮັດວຽກຖືກຕ້ອງກວ່ານັ້ນ, ດີກວ່ານັ້ນ ຄຸນງາມຄວາມດີຂອງພັກ ກໍແຮ່ງຈະໃຫຍ່ຫຼວງກວ່ານັ້ນອີກ.

ພະນັກງານ ແລະ ສະມາຊິກພັກ ເຮັດວຽກບໍ່ຖືກຕ້ອງ, ບໍ່ດີ, ມັນຍິ່ງມີຂໍ້ບົກພ່ອງຫຼາຍ, ໃນເມື່ອຂໍ້ບົກພ່ອງຫຼາຍຄຸນງາມຄວາມດີມັນກໍໜ້ອຍ, ຖ້າຂໍ້ບົກພ່ອງໜ້ອຍ ຄຸນງາມຄວາມດີມັນກໍຫຼາຍ, ນັ້ນເປັນທຳມະດາ, ເພາະສະນັ້ນ, ຕັ້ງແຕ່ດຽວນີ້ເປັນຕົ້ນໄປ ພະນັກງານທັງຫຼາຍ, ສະມາຊິກທັງຫຼາຍ, ແຕ່ລະມື້, ແຕ່ລະຄົນຕ້ອງຕັ້ງໃຈສັງເກດເບິ່ງຕົນເອງ, ສັງເກດເບິ່ງເພື່ອນສະຫາຍຂອງຕົນໃຫ້ດີ, ຖ້າຫາກເຫັນວ່າມີຂໍ້ບົກພ່ອງ ກໍໃຫ້ເດັດດ່ຽວແກ້ໄຂປ່ຽນແປງ ແລະ ຊ່ວຍເຫຼືອເພື່ອນສະຫາຍຂອງຕົນແກ້ໄຂປ່ຽນແປງອີກ, ຕ້ອງເຮັດແນວນັ້ນພັກຂອງເຮົາ ຈຶ່ງຈະຂະຫຍາຍໄວ ແລະ ວຽກງານຂອງເຮົາ ຈຶ່ງຈະສຳເລັດຜົນໄດ້ ຖ້າຫາກບໍ່ເດັດດ່ຽວແກ້ໄຂປ່ຽນແປງຂໍ້ບົກພ່ອງຂອງພວກເຮົາ ກໍເໝືອນວ່າພວກເຮົາ ເຊື່ອງອຳພະຍາດຢູ່ໃນຕົວຂອງພວກເຮົາ, ບໍ່ກ້າກິນຢາ ເຮັດໃຫ້ພະຍາດນັບມື້ນັບໜັກຂຶ້ນຕື່ມ ແລ້ວກາຍເປັນອັນຕະລາຍໃຫ້ແກ່ຊີວິດຂອງພວກເຮົາເອງ.

ຂໍ້ບົກພ່ອງນັ້ນມີຫຼາຍຢ່າງ, ພວກເຮົາອາດຈະແບ່ງຂໍ້ບົກພ່ອງເຫຼົ່ານັ້ນອອກເປັນ 3 ປະເພດຄື:

(1) ຂໍ້ບົກພ່ອງດ້ານຄວາມນຶກຄິດ ເປັນພະຍາດອັນໜຶ່ງທີ່ພວກເຮົາເອີ້ນວ່າ: **"ພະຍາດໃນເຮົາ"**.

(2) ຂໍ້ບົກພ່ອງກ່ຽວກັບການພົວພັນໃນພັກກັບບຸກຄົນນອກພັກ, ເປັນພະຍາດອັນໜຶ່ງທີ່ເອີ້ນວ່າ: **"ພະຍາດໃຈແຄບ"**.

(3) ຂໍ້ບົກພ່ອງກ່ຽວກັບວິທີເວົ້າ, ວິທີຂຽນ, ເປັນພະຍາດອັນໜຶ່ງທີ່ພວກເຮົາເອີ້ນວ່າ: **"ພະຍາດເປັນແຕ່ປາກ"**.

ນັ້ນແມ່ນສາມຊະນິດພະຍາດທີ່ເປັນອັນຕະລາຍທີ່ສຸດ, ຖ້າບໍ່ປົວມັນໄວ ປ່ອຍໃຫ້ມັນຕິດແປດອອກໄປ ແມ່ນມີການເສຍຫາຍຫຼາຍທີ່ສຸດ.

ກ) **ພະຍາດໃນເຮົາ:** ພະຍາດແຕ່ລະຊະນິດ ເກີດມາຈາກຕົ້ນເຫດຫຼາຍຢ່າງ, ແຕ່ຜົນຂອງມັນນັ້ນ ລ້ວນແຕ່ແມ່ນເຮັດໃຫ້ຄົນເຮົາເຈັບປ່ວຍ, ຕົ້ນເຫດຂອງພະຍາດໃນເຮົາແມ່ນ: ຂາດທິດສະດີ ດູຖູກທິດສະດີ ຫຼື ມີທິດສະດີນ້ຳເຕົ້າເປົ່າ. ກ່ອນອື່ນ, ກ່ອນອື່ນ ພວກເຮົາຕ້ອງເຂົ້າໃຈວ່າທິດສະດີແມ່ນຫຍັງ?.

ທິດສະດີ ແມ່ນນຳເອົາຄວາມຈິງໃນປະຫວັດສາດ, ໃນບົດຮຽນ, ໃນບັນດາການຕໍ່ສູ້, ການເບິ່ງ, ການແຍງການປຽບທຽບຢ່າງປານິດຄັກແນ່, ມາສະຫຼຸບເປັນຫຼັກການ ແລ້ວນເອົາມັນກັບຄືນໄປຢືນຢັນໃນພາກຕົວຈິງນັ້ນແມ່ນທິດສະດີແທ້ຈິງ.

ທິດສະດີເປັນຄືເຂັມທິດ, ມັນຊີ້ທິດທາງໃຫ້ພວກເຮົາໃນເວລາເຮັດວຽກການຕົວຈິງ.

**ບໍ່ມີທິດສະດີກໍມັກກະວົນກະວາຍຄືຫຼັບຕາເດີນທາງ.**

ສະບັບນີ້ ຂໍໂຈະໄວ້ພຽງເທົ່ານີ້ກ່ອນ ສະບັບໜ້າຈຶ່ງມາຮູ້ນຳກັນຕື່ມອີກວ່າ "ພະຍາດໃນເຮົາ" ຕອນຕໍ່ໄປຈະເຂັ້ມຂຸ້ນພຽງໃດ ເພື່ອບໍ່ໃຫ້ພາດບົດຮຽນອັນສຳຄັນ ແລະ ຍິ່ງໃຫຍ່ນີ້ ຂໍໃຫ້ບັນດາທ່ານຜູ້ອ່ານຕິດຕາມໄດ້ໃນສະບັບຕໍ່ໄປ.

ອ່ານຕໍ່ສະບັບໜ້າ...




# ອຸປະສັກຂອງການພັດທະນາ

# ດົ້ນກົບເມກ

ບາງຄົນຄິດຕື້ນ, ເບິ່ງໃກ້ ຈຶ່ງພາໃຫ້ບໍ່ເຂົ້າໃຈບັນຫາທີ່ກຳລັງເກີດຂຶ້ນ ແລະ ຫຼາຍບັນຫາທີ່ເກີດຂຶ້ນມັນອາດບໍ່ຈົບສິ້ນລົງໄວວາ ແລະ ເລື່ອນຫາຍໄປກັບສາຍລົມ ແຕ່ບາງບັນຫາທີ່ເກີດຂຶ້ນມັນອາດຝາກຮອຍຊໍ້າ ຝາກບົດຮຽນທັງດີ ແລະ ບໍ່ດີໄວ້ແກ່ຄົນລຸ້ນຫຼັງຕໍ່ມາ ຍົກຕົວຢ່າງ: ບາງກໍລະນີສໍ້ໂກງປະເພດ 18 ມຸງກຸດ ມັນກໍຈະສົ່ງຜົນກັບລະບຽບກົດເກນໜ້າທີ່ຮັບຜິດຊອບ ບາງກໍລະນີປ່ຽນແປງຜົນປະໂຫຍດລວມຂອງໝູ່ ຫຼື ຂອງສັງຄົມ ໃຫ້ກາຍເປັນຜົນປະໂຫຍດສ່ວນຕົວ ເຊິ່ງບັນຫາທີ່ເວົ້ານີ້ ມີປາກົດໃນຫຼາຍສັງຄົມໂລກ ບໍ່ວ່າສັງຄົມນັ້ນຈະມີການພັດທະນາສູງ ຫຼື ຕໍ່າກໍຕາມ ເຊັ່ນ: ການສໍ້ໂກງ ຫຼື ສໍ້ລາດບັງຫຼວງ, ປາກົດການທາງເສດຖະກິດ-ການເງິນທີ່ເກີດຂຶ້ນພົ້ນເດັ່ນຫຼາຍຮູບແບບ ໂຫຍດເປັນກຸ່ມກ້ອນ ທ່ານຜູ້ອ່ານກໍອາດໄດ້ຍິນມາກັບຫູວ່າ ກິນກັນເປັນໝູ່ຄະນະ.

ຜົນກະທົບທັງໄລຍະສັ້ນ ແລະ ໄລຍະຍາວຂອງປາກົດການຫຍໍ້ທໍ້ເສດຖະກິດສັງຄົມ ແລະ ວັດທະນະທຳ ຖ້າສັງເກດເບິ່ງໃຫ້ດີ ແມ່ນຍັງມີທ່າອ່ຽງເກີດຂຶ້ນຢູ່ເລື້ອຍໆ ເຊິ່ງອາດຍ້ອນຜົນກະທົບຂອງກະແສວັດຖຸນິຍົມ ແລະ ເສດຖະກິດຕະຫຼາດທີ່ມີການແຂ່ງຂັນ



ຜົນກະທົບແກ່ສັງຄົມທັງສ່ວນບຸກຄົນ ແລະ ສ່ວນລວມ ເຖິງແມ່ນວ່າປາກົດການຫຍໍ້ທໍ້ທາງສັງຄົມ ມັນບໍ່ພຽງປາກົດໃນຍຸກປັດຈຸບັນເທົ່ານີ້ດອກ ແຕ່ມັນເກີດຂຶ້ນມາຫຼາຍຍຸກຫຼາຍສະໄໝໂດຍຕິດພັນກັນມາໃນສັງຄົມ.

ປາກົດການຫຍໍ້ທໍ້ໃນສັງຄົມ ຊີ້ບອກການກະທຳຂອງບາງຄົນທີ່ລະເມີດ ແລະ ຝືນລະບຽບວິໄນ ແລະ ກົດໝາຍບ້ານເມືອງ ແລະ ຝືນທາງກ້າວໜ້າຂອງສັງຄົມໃນຫຼາຍດ້ານເຊັ່ນ: ຜູ້ລະເມີດຂາດສິນທຳຂາດຄຸນນະທຳ, ຂາດສິນທຳປະຕິວັດ, ແລະ ຂະໜາດໃນບ່ອນທີ່ມີອຳນາດ ແລະ ເງິນຕາທີ່ພົວພັນການຄ້າຂາຍ ຫຼື ຜົນປະໂຫຍດຊັບສິນ.

ປາກົດການຫຍໍ້ທໍ້ ດັ່ງທີ່ເວົ້າຂ້າງເທິງ ມັນບໍ່ຈົບບໍ່ສິ້ນຂາດໂຕ ແຕ່ມັນຈະເກີດແຜ່ລາມໄປໜ້າຕ່າງໆ ທີ່ເກີດຂຶ້ນໃນຫຼາຍຂົງເຂດວຽກງານເຊັ່ນ: ດ້ານແນວຄິດ-ວັດທະນະທຳ ຫຼິ້ນກິນຟຸມເຟືອຍ ບໍ່ເຄົາລົບສິນທຳ-ຮີດຜົວຄອງເມຍ ແລະ ປາກົດການຫຍໍ້ທໍ້ ດ້ານການຄ້າຂາຍ (ເສດຖະກິດ) ການສໍ້ໂກງຊັບສິນບາງກໍລະນີສວຍໃຊ້ໜ້າທີ່ຕຳແໜ່ງຜົນປະສູງ ພັກດັນໃຫ້ຫຼາຍຄົນແລ່ນຕາມກະແສ ເຊິ່ງເຮົາບໍ່ສາມາດປະຕິເສດໄດ້; ຂະນະດຽວກັນຜົນກະທົບດັ່ງກ່າວ ຍັງແຜ່ລາມໂລກໃສ່ຮູບແບບການດຳລົງຊີວິດທີ່ອວດເຫີ່ນິຍົມກັນທາງດ້ານບໍລິໂພກວັດຖຸ ທີ່ຖືກັນເປັນປົກກະຕິເປັນຕົວບອກສະຖານະ...!

ທັງໝົດທັງມວນທີ່ກ່າວມານັ້ນ ມັນເປັນອຸປະສັກໃນການພັດທະນາຂອງທົ່ວມຸມໂລກ.

# ບຸນເຂົ້າຈີ່

# ໂດຍ: ນາງສີດາ

ບຸນເຂົ້າຈີ່ ແມ່ນບຸນປະເພນີດັ້ງເດີມ ສະໄໝກ່ອນຊາວບ້ານພາກັນເຮັດເຂົ້າຈີ່ ເພື່ອຖວາຍພະຍາຟ້າພະຍາແຖນ ມາຮອດສະໄໝລາວມີສາສະໜາພຸດຈະເລີນຮຸ່ງເຮືອງ ຈຶ່ງນິຍົມພາກັນເຮັດເຂົ້າຈີ່ໄປຖວາຍພະສົງສຳມະເນນ; ການເຮັດບຸນເຂົ້າຈີ່ຕາມປະເພນີຕ້ອງທາໄຂ່, ທານໍ້າອ້ອຍ ດັ່ງມີຄຳໂຕງໂຕຍໄດ້ກ່າວໄວ້ວ່າ “ເດືອນສາມຄ້ອຍລົມວອຍໆ ເຈົ້າຫົວຄອຍປັ້ນເຂົ້າຈີ່ ເຂົ້າຈີ່ບໍ່ໃສ່ນໍ້າຕານ ບໍ່ລາດນໍ້າອ້ອຍ ຈິວນ້ອຍບໍ່ອຸ່ນໃຈ”.



ບຸນເຂົ້າຈີ່ ມີນິທານທ້ອງຖິ່ນ ແລະ ນິທານສາສະໜາກ່າວໄວ້ວ່າ: ປາງກ່ອນມີແມ່ຍິງຄົນໜຶ່ງ ຊື່ປຸນນະທາສີ ເປັນຄົນທຸກຍາກໄຮ້ ແລະ ເປັນຄົນຮັບໃຊ້ເສດຖີຄົນໜຶ່ງ ຢູ່ໃນເມືອງລາຊະຄື (ປະເທດອິນເດຍ) ວັນໜຶ່ງ ເສດຖີແຕ່ງໃຫ້ນາງໄປຕຳເຂົ້າແຕ່ເຊົ້າເທົ້າຄໍ່າ; ນາງມີຄວາມອິດເມື່ອຍຫຼາຍ, ນາງຈຶ່ງເອົາຮໍາເຂົ້າປັ້ນເປັນກ້ອນຈີ່ໃຫ້ສຸກແລ້ວເອົາໃສ່ໃນພົກຜ້າຍ່າງໄປຕັກນໍ້າ ເພື່ອຈະບໍລິໂພກເຂົ້າຈີ່ນັ້ນ; ເມື່ອໄປຕາມທາງນາງພົບພຣະພຸດທະເຈົ້າ ເລີຍເກີດຄວາມເຫຼື້ອມໃສຂຶ້ນທັນທີ ແລະ ຄິດວ່າຕົນເປັນຄົນທຸກໄຮ້ໃນຊາດນີ້ ເພາະບໍ່ໄດ້ທຳບຸນໃຫ້ທານໄວ້ໃນຊາດກ່ອນ ແລະ ຊາດນີ້ກໍບໍ່ເຄີຍໄດ້ທຳບຸນເລີຍ; ຈາກນັ້ນ, ນາງກໍເອົາເຂົ້າຈີ່ທີ່ເຮັດດ້ວຍຮໍາເຂົ້າໄປຖວາຍໃຫ້ແກ່ພຣະພຸດທະເຈົ້າ, ເມື່ອພຣະອົງຊົງຮັບແລ້ວກໍນັ່ງສະເຫວີຍຢູ່ຕໍ່ໜ້ານາງ ເມື່ອສະເຫວີຍແລ້ວກໍໄດ້ຕັດອະໂມທະນາກະຖາໂຜດນາງຈົນສຳເລັດໂສດາປະຕິຜົນເປັນອະລິຍະບຸກຄົນ ໃນພຸດທະສາສະໜາ, ເມື່ອນາງຕາຍໄປ ກໍໄປເກີດໃນສະຫວັນ, ສະເຫວີຍສົມບັດໃນວິມານຄຳ.

ນອກຈາກບຸນເຂົ້າຈີ່ແລ້ວ ໃນເດືອນສາມເພັງ ຍັງເປັນວັນສຳຄັນທາງສາສະໜາພຸດອີກວັນໜຶ່ງ ຄື ວັນວິມາຄະບູຊາ (ການບູຊາໃນວັນມາຄະ ຫຼື ເອີ້ນວ່າ ການບູຊາໃນເດືອນສາມເພັງ) ເຊິ່ງພຣະອົງໄດ້ສະແດງທຳມະເທດສະໜາ ຄືຫົວໃຈສຳຄັນຂອງສາສະໜາພຸດ ອັນເປັນຫຼັກສາມປະການຄື: ບໍ່ທຳຄວາມຊົ່ວ, ຈົ່ງທຳຄວາມດີ, ທຳຈິດໃຈໃຫ້ບໍລິສຸດຜ່ອງໃສ.

ໃນທົດສະວັດຕົ້ນຂອງສະຕະວັດທີ່ 21 ບຸນມາຄະບູຊາ ໄດ້ກາຍເປັນບຸນໜຶ່ງ ທີ່ອົງການ ສປຊ ຮັບຮອງເອົາເປັນບຸນທາງສາກົນ; ດັ່ງນັ້ນ, ບັນດາປະເທດທີ່ນັບຖືສາສະໜາພຸດ ເມື່ອເຖິງເດືອນສາມເພັງ ກໍມີກິດຈະກຳຕ່າງໆຂຶ້ນຕາມປະເພນີ.



# ຂຽນຄຳລາວໃຫ້ຖືກ

# ຄູແສງ

| ຖືກ | ຜິດ |
|---|---|
| ສັບລໍ້ | ຊັບລໍ້ |
| ສັບສົນ | ຊັບສົນ |
| ສັບປ່ຽນ | ຊັບປ່ຽນ |
| ສັບປະດາ | ຊັບປະດາ |
| ສັບພະວິຊາ | ຊັບພະວິຊາ |
| ສັບພະນາມ | ຊັບພະນາມ |
| ສັບພະສິນຄ້າ | ຊັບພະສິນຄ້າ |
| ສັບປົນກົນລະ | ຊັບປົນກົນລະ |
| ສັບຊ້ອນພະນັກງານ | ຊັບຊ້ອນພະນັກງານ |




ຈຸດຢືນ: ໃນຄຳສັບທີ່ວ່າ “ຈຸດຢືນ” ຈະໝາຍເຖິງພາວະ. ການະ ຫຼື ສະພາບ ແລະ ທີ່ຕັ້ງຂອງຕົນ ກໍຍ່ອມສະແດງອອກໃນທັດສະນະ ຫຼື ຈຸດຢືນຂອງຕົນ. ຄຳວ່າ ທັດສະນະ ແມ່ນການສະແດງອອກເຖິງຈຸດຢືນ. ຖ້າຄົນເຮົາເວົ້າເຖິງຈຸດຢືນ ກໍບໍ່ຮູ້ໄດ້ວ່າຈຸດຢືນນັ້ນເປັນແນວໃດ. ສະນັ້ນ ຈະຕ້ອງສະແດງອອກໃນທັດສະນະ ຈຶ່ງຈະຮູ້ໄດ້. ບັນດານັກຂຽນ. ນັກຂ່າວ ຫຼື ນັກປະພັນ ແລະ ນັກວັນນະຄະດີ. ຖ້າຢາກຮູ້ວ່າຈຸດຢືນແນວໃດ. ມັນກໍຕ້ອງສະແດງອອກຕາມທັດສະນະຂອງການຂີດຂຽນ ຈຶ່ງຈະຮູ້ໄດ້ວ່າຜູ້ກ່ຽວມີຈຸດຢືນແນວໃດ. ສ່ວນຜູ້ທີ່ບໍ່ມີຈຸດຢືນແນວໃດ. ສ່ວນຜູ້ທີ່ບໍ່ແມ່ນນັກຂຽນ ກໍຕ້ອງສະແດງອອກຜ່ານການເວົ້າ ຫຼື ການກະທຳໃນຕົວຈິງ. ລາວເຮົາເປັນປະເທດສັງຄົມນິຍົມ ກໍຕ້ອງໄປເບິ່ງທັດສະນະໃນບົດຂຽນ. ຖ້າຜູ້ບໍ່ເປັນນັກຂຽນກໍຕ້ອງສະແດງອອກທາງການເວົ້າ ແລະ ການກະທຳຕົວຈິງນັ້ນໆ.



## ສຸກສະບາຍຫາຍໂຣຄາ

# ອາຫານບຳລຸງສຸຂະພາບຜິວ

ແປ ແລະ ຮຽບຮຽງໂດຍ: ສາວແວ່ນ



ການມີຜິວງາມສຸຂະພາບດີຈາກພາຍໃນສູ່ພາຍນອກ ສາມາດເຮັດໄດ້ ໂດຍການເລືອກຮັບປະທານອາຫານທີ່ຊ່ວຍຮັກສາຜິວໃຫ້ສຸຂະພາບດີ ບາງທ່ານອາດເລືອກວິທີເບິ່ງແຍງຜິວດ້ວຍວິທີທຳມະຊາດ ແລະ ບາງທ່ານອາດຈະເລືອກກິນອາຫານເສີມ ແຕ່ການກິນອາຫານເສີມ ຖ້າກິນໄປດົນໆ ສານພິດອາດຈະຕົກຄ້າງ ແລະ ສະສົມໃນຮ່າງກາຍ ພາໃຫ້ເກີດອັນຕະລາຍຕໍ່ສຸຂະພາບ; ດັ່ງນັ້ນ, ໃນຄໍລຳສຸຂະບາຍຫາຍໂລຄາສະບັບນີ້ ເຮົາມີອາຫານທີ່ມີປະໂຫຍດຕໍ່ຜິວພັນ ມານຳສະເໜີຕໍ່ທ່ານຜູ້ອ່ານດັ່ງຕໍ່ໄປນີ້:

**1. ປາ**

ບໍ່ວ່າຈະເປັນປາທະເລ ຫຼື ປານ້ຳຈືດ ລ້ວນແຕ່ມີທາດໂປຕີນທີ່ມີຄຸນນະພາບ ແລະ ອາຊິດໄຂມັນໂອເມກາ 3 (omega-3) ທີ່ສຳຄັນຊ່ວຍບຳລຸງຜິວ ແລະ ຫຼຸດຜ່ອນຄວາມເສຍຫາຍຂອງຄໍລາເຈນ ແລະ ອີລາຕິນ (elastin) ພ້ອມທັງຊ່ວຍຮັກສາ ແລະ ສ້າງຄວາມຊຸ່ມຊື່ນໃຫ້ກັບຜິວໄດ້ດີ ທີ່ສຳຄັນປາຍັງມີວິຕາມິນດີທີ່ສາມາດປ້ອງກັນຜິວຈາກແສງແດດ ແລະ ລັງສີ UV ແລະ ຊ່ວຍໃຫ້ຈຸລັງຜິວຈະເລີນເຕີບໂຕໄດ້ດີນຳອີກ.

**2. ໝາກອາໂວກາໂດ**

ໝາກອາໂວກາໂດ ມີສານອາຫານທີ່ຈຳເປັນຕໍ່ຜິວໜັງ ແລະ ຊ່ວຍຕ້ານການແກ່ກ່ອນໄວ ເພາະວິຕາມິນເອທີ່ມີໃນອາໂວກາໂດເປັນສານທີ່ຊ່ວຍຜັດປ່ຽນຈຸລັງຜິວ ເຮັດໃຫ້ຜິວສຸຂະພາບດີ ມີນ້ຳມີນວນ ພ້ອມນັ້ນ, ຍັງມີຄາໂລທີນອຍ (carotenoids) ທີ່ມີໜ້າທີ່ປ້ອງກັນຜິວຈາກແສງແດດ ແລະ ລັງສີ UV ແລະ ຍັງມີໄຂມັນດີທີ່ຊ່ວຍຂັບລ້າງໄຂມັນທີ່ບໍ່ດີ ພ້ອມທັງຊ່ວຍຮັກສານ້ຳໃນຜິວໜັງ ເຮັດໃຫ້ຜິວໜັງມີຄວາມຊຸ່ມຊື່ນ, ເຕັມໄປດ້ວຍນ້ຳ ແລະ ສຸຂະພາບດີ.

**3. ບ້ອກໂຄລີ**

ບ້ອກໂຄລີ ອຸດົມໄປດ້ວຍວິຕາມິນ ທີ່ຫຼາກຫຼາຍ ທັງໂປຕີນ, ແຮ່ທາດ ແລະ ເສັ້ນໃຍ ຈຶ່ງສາມາດບຳລຸງສາຍຕາ, ຫຼຸດການອັກເສບ, ຫຼຸດນ້ຳຕານ, ບຳລຸງກະດູກ ແລະ ແຂ້ວ ແລະ ປ້ອງກັນໂລກກະດູກຜ່ອຍໄດ້; ພ້ອມນັ້ນ, ຍັງປະກອບດ້ວຍເຊເລນຽມ ເຊິ່ງເປັນສານຕ້ານອະນຸມູນອິດສະຫຼະ ທີ່ເພີ່ມປະສິດທິພາບກາຍືດຫົດຂອງຜິວໜັງ ນອກນີ້, ຍັງຊ່ວຍຫຼຸດຜ່ອນການແກ່ຂອງຜິວໜັງນຳອີກ.

**4. ຖົ່ວເຫຼືອງ**

ຖົ່ວເຫຼືອງ ອຸດົມສົມບູນໄປດ້ວຍທາດໂປຕີນ ແລະ ສານໄຟໂຕອິດໂຕເຈນ (phytoestrogens) ເຊິ່ງເປັນສານທີ່ຊ່ວຍຜະລິດອິດໂຕເຈນໃນຮ່າງກາຍ ຈຶ່ງເຮັດໃຫ້ບັນຫາຮອຍຫ່ຽວຫຼຸດລົງ ແລະ ຍັງຊ່ວຍປ່ຽນເຊວຜິວ ແລະ ເລັ່ງການເກີດໃໝ່ຂອງຈຸລັງຜິວ ເຮັດໃຫ້ຜິວໜັງເບິ່ງອ່ອນກວ່າອາຍຸ ທີ່ສຳຄັນຖົ່ວເຫຼືອງຍັງມີວິຕາມິນອີ ທີ່ຊ່ວຍເພີ່ມຄວາມຊຸ່ມຊື່ນໃຫ້ກັບຜິວນຳອີກ.

**6. ໝາກຫຸ່ງ**

ໝາກຫຸ່ງ ເປັນໝາກໄມ້ທີ່ມີສານໄລໂຄປີນ (lycopene) ເຊິ່ງເປັນສານໃນກຸ່ມຄາໂລທີນອຍ (carotenoid) ທີ່ເຮັດໜ້າທີ່ເປັນສານຕ້ານອະນຸມູນອິດສະຫຼະ ຈຶ່ງຊ່ວຍຊະລໍຄວາມແກ່ໄດ້ຢ່າງມີປະສິດທິພາບ ພ້ອມທັງມີສານຕ້ານອະນຸມູນອິດສະຫຼະຫຼາຍ ຈຶ່ງຊ່ວຍຊະລໍການເສື່ອມຂອງເຊວ ແລະ ປ້ອງກັນສານພິດບໍ່ໃຫ້ເຂົ້າສູ່ເຊວ ຈຶ່ງເຮັດໃຫ້ເຍື່ອຈຸລັງແຂງແຮງ.

**7. ຂີ້ໝິ້ນ**

ຂີ້ໝິ້ນ ມີເຄີຄູມີນອຍ (curcuminoids) ເຊິ່ງເປັນສານຕ້ານອະນຸມູນອິດສະຫຼະ ທີ່ຊ່ວຍບຳລຸງຮ່າງກາຍແລະຜິວໜັງຊ່ວຍຕ້ານສານອະນຸມູນອິດສະຫຼະ, ຊ່ວຍໃຫ້ຜິວພັນແຂງແຮງ, ຫຼຸດຜ່ອນການອັກເສບ, ຫຼຸດຈຸດດ່າງດຳ, ຮອຍແດງ ແລະ ປ້ອງກັນການແກ່ກ່ອນອາຍຸໄດ້ດີ.

---

## ອາດ ກະວີລາວ

# ກຳມະບານລາວກ້າວໄປ

**# ໂດຍ: ກົງໃຈ ແສງອຳພັນ**

(ເນື່ອງໃນວັນສ້າງຕັ້ງສະຫະພັນກຳມະບານລາວ
ຄົບຮອບ 67 ປີ (1/2/1956-1/2/2023)

| | |
|---|---|
| ❊ 1 ກຸມພາ ປະກາດກ້ອງ | ວັນແຫ່ງກຳມະບານລາວ |
| ຊາວຜູ້ອອກແຮງງານ | ຊື່ນບານຫົວຍິ້ມ |
| ມີຜູ້ນຳພາສູ້ | ທວງສິດທິມະນຸດ |
| ຫຼຸດຜ່ອນການຮັບໃຊ້ | ແບບບໍ່ເຄີຍໄດ້ຄ່າແຮງ |
| ❊ ເມື່ອກ່ອນ ນ້ຳໃຈແສນເຫືອດແລ້ງ | ເກີນກວ່າທະເລຊາຍ ນາຍທຶນເອີຍ |
| ຊຸມເຈົ້ານາຍເລືອດເຢັນ | ຂູ່ເຂັນຈາຂ້າ |
| ຄັນວ່າໃຜທວງຄົ້ນ | ສິດຕົນນາມມະນຸດ |
| ພວກເຂົາຂົ່ມຂູ່ຂ້າ | ຫາກໃຜອ້າເອີ່ຍຂໍ |
| ❊ ຕໍ່ມາໂຮມກຸ່ມກ້ອນ | ທວງປະໂຫຍດຄວນມີ |
| ພັກປະຊາເປັນແກນນຳ | ດຸ່ງເດີນພາສູ້ |
| ມະຕິຕົກລົງແຈ້ງ | ຖະແຫຼງການປະກາດເດັ່ນ |
| ເຮັດວຽກແປດຊົ່ວໂມງຕໍ່ມື້ | ຄ່າແຮງໄດ້ຕອບແທນ ຊອບແລ້ວ! |
| ❊ ຍ້ອນວ່າມີພັກຊີ້ | ນຳພາຮຸ່ງເຮືອງໃສ |
| ຊາດຈະເລີນກ້າວໄປ | ໄພ່ປະຊາຊາວເຊື້ອ |
| ຕັ້ງແຕ່ເໜືອເຖິງໃຕ້ | ປວງຊົນລາວຫວັງເພິ່ງ |
| ພັກຜູ້ນຳເກັ່ງກ້າ | ປະຊາຍ້ອງເຊີດຊູ ແທ້ນາ! |
| ❊ 1 ກຸມພາ ຂວບເຂົ້າ | ຄົບຮອບ 67 ປີ |
| ຂໍໃຫ້ມີພະລັງ | ເຫື່ອແຮງແຂງກ້າ |
| ກຳມະບານລາວທຸກຖ້ວນໜ້າ | ໂລຄາຢ່າບຽນບຽດ |
| ມີຄວາມສຸກສືບສ້າງ | ພາລາວກ້າວຮຸ່ງວິໄລ ຊອບແລ້ວ! |

---



## ຟັງຫາຍ ສະບາຍ

*(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສາວຈົ້ມ**

❊ **ຈົ່ມ**ເລື່ອງການປ່ຽນແປງໃໝ່ ພະນັກງານ-ລັດຖະກອນ ຕ່າງກໍດີໃຈ ທີ່ໄດ້ເຫັນຂໍ້ຕົກລົງໃໝ່ ສະບັບເລກທີ **0200/ກງ,** ລົງວັນທີ **25 ມັງກອນ 2023** ຕາມເນື້ອໃນບອກແຈ້ງ ລາຍລະອຽດງົບປະມານ ການເບີກ-ຈ່າຍອັດຕາ ຄ່າກິນ-ນອນພ້ອມ ມີຜົນສັກສິດໃຊ້ ການເດີນທາງອອກຫ້ອງຖິ່ນ ອັດຕາກິນ-ອັດຕານອນ ຊິບໍ່ໄດ້ຈົກຈ່າຍເພີ້ມ ຄືກີ້ເກົ່າຫຼັງ **ອີກແລ້ວ!**

❊ **ທີ 25** ຜ່ານໄປ ໃນທີ່ສຸດ ກໍເຫັນການປ່ຽນແປງ ຂອງໂຕເລກລວມຍອດເງິນເດືອນແຈ້ງເຕືອນເຂົ້າບັນຊີ ວ່າມີຍອດເພີ່ມຂຶ້ນ ເຖິງຈະບໍ່ຫຼວງບໍ່ຫຼາຍ ແຕ່ກໍດີໃຈ ຕໍ່ຜົນຮັບດັ່ງກ່າວ ດີກວ່າປະປ່ອຍໃຫ້ ຄ່າແລກປ່ຽນເງິນຕາ ກີບແລກບາດທັງໂດລາ ແລ່ນຊິງກັນຂຶ້ນ ຄາວນີ້ເງິນເດືອນເຕີ້ຍ ຕຶງໂຕຄານແລ່ງ ເຖິງບໍ່ແລວຊ່ອງໜ້າ ເຫັນວ່າຕຶງຕື່ນເຕີ້ຍ ກໍຫົວຍິ້ມຂຶ້ນຊ່ອງ **ຮຽນແລ້ວ!**

## ຊອບຍິ້ມ

# ແອ່ນຕຸ້ງ



**ເລື່ອງ: ມັນຕ່າງກັນ**

ມື້ໜຶ່ງ ພໍ່ທ້າວກິກວດເບິ່ງວຽກບ້ານຂອງລາວ ພ້ອມທັງຮ້າຍວ່າ:

+ ມຶງຄືມາໂງ່ແທ້ ຄະແນນຫຼຸດລົງຕະຫຼອດ ວານນີ້ໄດ້ 5 ມື້ນີ້ໄດ້ 0, ບາດບັກເອນທັ້ນນາ ວານນີ້ໄດ້ 5 ມື້ນີ້ໄດ້ 8

- ຂ້ອຍກັບມັນຕ່າງກັນ ຊິປຽບທຽບເຮັດຫຍັງ

+ ມັນຊິຕ່າງຫຍັງ ມັນກະມີສະໝອງ ມຶງກະມີສະໝອງ

- ກະແມ່ນຢູ່ ແຕ່ພໍ່ແມ່ມັນສະຫຼາດໃດ

+ ?!?

## ຄະຕິເຕືອນໃຈ

*# ດອກສະຍອມ*

ຖ້າບໍ່ລົງມືເຮັດ
ຄວາມສຳເລັດກໍບໍ່ເກີດ
ຄວາມສຳເລັດອັນປະເສີດ
ມັກເກີດກັບຄົນທີ
"ເຮັດແທ້ທ່າຈິງ"




# ເຊິ່ງ–ຊຶ່ງ

**"ເຊິ່ງ"** ແລະ **"ຊຶ່ງ"** ເປັນຄຳພ້ອມຄວາມໝາຍ ໃນກໍລະນີເປັນຄຳສັບພະນາມໃຊ້ແທນຄຳນາມ. ທັງສອງຄຳນີ້ສາມາດໃຊ້ແທນກັນໄດ້ໃນທຸກກໍລະນີ ເຊັ່ນ:

- ເຮົາຢາກໄດ້ລົດຄັນນີ້ ເຊິ່ງຫາກໍຜະລິດອອກໃໝ່ = ເຮົາຢາກໄດ້ລົດຄັນນີ້ ຊຶ່ງຫາກໍຜະລິດອອກໃໝ່.
- ຂ້ອຍມັກອ່ານເລື່ອງສັ້ນ ເຊິ່ງແຕ່ງໂດຍເຊຄົບ = ຂ້ອຍມັກອ່ານເລື່ອງສັ້ນ ຊຶ່ງແຕ່ງໂດຍເຊຄົບ.

ຄຳວ່າ **"ເຊິ່ງ"** ປາກົດເຫັນໃຊ້ໃນບົດກອນ "ສັງສິນໄຊ" ທີ່ປະພັນຂຶ້ນໃນສະຕະວັດທີ 17 ດັ່ງ:

- ແລ້ວລ່ວງຂຶ້ນ ເຖິງເມກເມໂຄ
- ເທພາຊົມ ເຊິ່ງບຸນຍໍຍ້ອງ

ສ່ວນຄຳວ່າ **"ຊຶ່ງ"** ປາກົດເຫັນໃຊ້ໃນແບບສອນອ່ານພາສາລາວ ປີ 1932, ປຶ້ມໄວຍາກອນລາວ ປີ 1935, ປຶ້ມວັນນະຄະດີສານ ແລະ ປຶ້ມຕ່າງໆຂອງຄະນະກຳມະການວັນນະຄະດີໃນຊຸມປີ 1950 ລ້ວນແຕ່ໃຊ້ຄຳວ່າ **"ຊຶ່ງ"** ເຂົ້າໃນການພິມບົດຂຽນຕ່າງໆຂອງຕົນ.

ນັບແຕ່ປີ 1962 ພາຍຫຼັງການປະຕິຮູບການສຶກສາລາວຂອງກະຊວງສຶກສາທິການ, ການສະກົດຄຳນີ້ ກໍປ່ຽນເປັນຄຳວ່າ **"ເຊິ່ງ"**. ບັນດາປຶ້ມແບບຮຽນ ຕະຫຼອດຮອດປຶ້ມໄວຍາກອນ ກໍໃຊ້ຄຳວ່າ **"ເຊິ່ງ"** ເຊິ່ງສອດຄ່ອງກັບການສະກົດຄຳນີ້ຢູ່ເຂດປົດປ່ອຍ ໂດຍໃຊ້ **"ເຊິ່ງ"** ໃນບັນດາປຶ້ມແບບຮຽນ ແລະໄວຍາກອນລາວສະບັບທ່ານພູມີ ວົງວິຈິດ ປີ 1967.

ພາຍຫຼັງສ້າງຕັ້ງ ສປປ ລາວ, ນັບແຕ່ປີ 1976 ເປັນຕົ້ນມາ ປຶ້ມແບບຮຽນຂອງສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ກໍໄດ້ໃຊ້ຄຳວ່າ "ເຊິ່ງ" ເຂົ້າໃນບັນດາບົດຮຽນໃນປຶ້ມແບບຮຽນຕ່າງໆ.

ເມື່ອກວດສອບເບິ່ງໃນວັດຈະນານຸກົມພາສາລາວສະບັບຕ່າງໆ ກໍປາກົດເຫັນບັນຈຸທັງ **"ເຊິ່ງ"** ແລະ **"ຊຶ່ງ"**:

ໃນວັດຈະນານຸກົມລາວ ສະບັບມະຫາສິລາ ວີລະວົງ ໄດ້ໃຫ້ນິຍາມ **"ເຊິ່ງ"** ວ່າ: "ຖ້າເປັນຄຳສັນທານ ແມ່ນເປັນຄຳໃຊ້ແທນນາມທີ່ຢູ່ທາງໜ້າໂດຍບໍ່ຕ້ອງອອກຊື່ນາມນັ້ນອີກ; ຖ້າເປັນຄຳບຸບພະບົດ ແມ່ນເປັນຄຳຕໍ່ໜ້າຄຳນາມທີ່ເປັນກຳດັ່ງ "ອາໄສເຊິ່ງບຸນ" ເປັນຕົ້ນ; ແລະຍັງມີຄວາມໝາຍວ່າ ຕໍ່, ຊື່, ຊ້ອງ ດັ່ງວ່າ "ຢູ່ເຊິ່ງໜ້າ". ພ້ອມກັນນັ້ນ, ເພິ່ນຍັງໄດ້ບັນຈຸຄຳວ່າ **"ຊຶ່ງ"** ໂດຍບອກໃນວົງເລັບວ່າ (ເບິ່ງ ເຊິ່ງ).

ສ່ວນວັດຈະນານຸກົມພາສາລາວສະບັບອື່ນໆ ກໍມີລັກສະນະດັ່ງດຽວກັນ ເຊັ່ນໃນສະບັບສະຖາບັນວິທະຍາສາດສັງຄົມແຫ່ງຊາດ ປີ 2012 ໄດ້ໃຫ້ຄຳນິຍາມ **"ເຊິ່ງ"** ໂດຍໃຫ້ຄວາມໝາຍ 3 ຢ່າງດັ່ງນີ້:

- ກໍລະນີເປັນຄຳຕໍ່ຫຼືຄຳສັນທານ ໝາຍເຖິງ ເປັນຄຳໃຊ້ແທນນາມທີ່ຢູ່ໜ້າໂດຍບໍ່ຕ້ອງອອກຊື່ນາມນັ້ນອີກ; ບາງເທື່ອ ເອີ້ນ ຊຶ່ງ.
- ກໍລະນີເປັນຄຳບຸບພະບົດ ຫຼືຄຳເຊື່ອມ ມີຄວາມໝາຍ "ເປັນຄຳຕໍ່ໜ້າແທນນາມທີ່ເປັນຄຳໃຫ້ຄວາມໝາຍນັ້ນເຊັ່ນ ອາໄສເຊິ່ງບຸນ ໝາຍເຖິງອາໄສບຸນແທ້ໆບໍ່ແມ່ນອາໄສແນວອື່ນ".
- ກໍລະນີທີ່ເປັນຄຳບຸບພະບົດ ຫຼືຄຳເຊື່ອມ ທີ່ມີຄວາມໝາຍວ່າ ຕໍ່, ຊື່, ຊ້ອງ ເຊັ່ນ ຢູ່ຕໍ່ໜ້າ, ຍືນເຊິ່ງໜ້າ.

ໃນວັດຈະນານຸກົມເຫຼັ້ມນີ້ ບໍ່ໄດ້ບັນຈຸຄຳວ່າ **"ຊຶ່ງ"** ເຂົ້າໃນຄຳຫຼັກ ພຽງແຕ່ບອກຢູ່ໃນຄຳຫຼັກ **"ເຊິ່ງ"** ວ່າ ບາງເທື່ອເອີ້ນ **"ຊຶ່ງ"**.

ມາຮອດປັດຈຸບັນ, ສື່ສິ່ງພິມຕ່າງໆປາກົດເຫັນໃຊ້ບໍ່ຄືກັນ ເຊັ່ນ ໜັງສືພິມປະຊາຊົນໃຊ້ **"ຊຶ່ງ"** ສ່ວນໜັງສືພິມວຽງຈັນໃໝ່ໃຊ້ **"ເຊິ່ງ"**. ແຕ່ໃນເອກະສານທາງການບໍ່ວ່າສາຍພັກກໍຄືສາຍລັດກໍເຫັນໃຊ້ຄຳວ່າ **"ເຊິ່ງ"** ເປັນສ່ວນຫຼາຍ. ພ້ອມດຽວກັນນັ້ນ ໃນວາລະສານ ຫຼືເອກະສານບາງສະບັບປາກົດເຫັນໃຊ້ທັງ **"ເຊິ່ງ"** ແລະ **"ຊຶ່ງ"** ຢູ່ໃນສະບັບດຽວກັນ ເຊິ່ງຖືວ່າບໍ່ຖືກຕາມຫຼັກການທີ່ໄດ້ວາງໄວ້ວ່າ ໃນປຶ້ມຫົວດຽວ ຫຼື ເອກະສານສະບັບດຽວກັນ ຕ້ອງໃຊ້ຄຳທີ່ສະກົດແບບດຽວກັນໝົດທັງສະບັບ.

ທ່ານຜູ້ອ່ານເດ, ມັກໃຊ້ **"ເຊິ່ງ"** ຫຼື **"ຊຶ່ງ"**?




# ນາຍົກລັດຖະມົນຕີນິວຊີແລນ ເຂົ້າພິທີຮັບຕຳແໜ່ງຢ່າງເປັນທາງການ



ອີງຕາມການລາຍງານຂ່າວ ໃຫ້ຮູ້ວ່າ: ທ່ານ ຄຣິສ ຮິບກິນ ກ້າວຂຶ້ນເປັນນາຍົກລັດຖະມົນຕີຄົນທີ 41 ຂອງນິວຊີແລນ ຢ່າງເປັນທາງການ ແລ້ວໃນວັນທີ 25 ມັງກອນ ພາຍຫຼັງເຂົ້າພິທີສາບານຕົນຮັບຕຳແໜ່ງ ຢູ່ນະຄອນຫລວງເວລລິງຕັນ, ຂະນະດຽວກັນ ກໍເປັນການອຳລາຕຳແໜ່ງຂອງອະດີດຜູ້ນຳຍິງ ທ່ານ ນາງ ຈາຊິນດາ ອານເດີນ ນຳເຊັ່ນກັນ.

ທ່ານ ຄຣິສ ຮິບກິນ ກ່າວຫຼັງຈາກເຂົ້າຮັບຕຳແໜ່ງຢ່າງເປັນທາງການວ່າ "ນີ້ຄືສິດທິພິເສດ ແລະ ຄວາມຮັບຜິດຊອບຍິ່ງໃຫຍ່ທີ່ສຸດໃນຊີວິດຂອງຂ້າພະເຈົ້າ. ຂ້າພະເຈົ້າຮູ້ສຶກຕື່ນເຕັ້ນຕໍ່ຄວາມທ້າທາຍທີ່ຖ້າຢູ່ທາງໜ້າ".

ທ່ານ ຄຣິສ ຮິບກິນ ອາຍຸ 44 ປີ ກ່າວວ່າ: ຕົນເອງເປັນຊາວນິວຊີແລນທຳມະດາໆ ທີ່ມີພື້ນຖານມາຈາກຊົນຊັ້ນແຮງງານ, ມີຊີວິດລຽບງ່າຍ ແລະ ມັກຂີ່ລົດຖີບໄປເຮັດວຽກ ໂດຍທ່ານເຄີຍກ່າວກ່ອນໜ້ານີ້ວ່າ: ໂຄວິດເປັນປັດໄຈທີ່ເຮັດໃຫ້ເກີດວິກິດໃນຂະແໜງສາທາລະນະສຸກ ແລະ ສິ່ງຜົນກະທົບຕໍ່ຂະແໜງເສດຖະກິດ ເຊິ່ງລັດຖະບານໃນຍຸກຂອງທ່ານຈະເນັ້ນແກ້ໄຂບັນຫານີ້ເປັນຫລັກ.

ຢ້ອນກັບໄປເມື່ອວັນທີ 19 ມັງກອນຜ່ານມາ, ນາງ ຈາຊິນດາ ອານເດີນ ອະດີດນາຍົກລັດຖະມົນຕີຂອງນິວຊີແລນ ໄດ້ກ່າວວ່າ: ທ່ານໄດ້ຕັດສິນໃຈລາອອກຈາກການເປັນຜູ້ນຳປະເທດ ເພາະຮູ້ສຶກ "ໝົດໄຟ" ຫລັງຈາກຕໍ່ສູ້ກັບວິກິດຂອງປະເທດມາເປັນໄລຍະເວລາຫຼາຍປີ ບໍ່ວ່າຈະເປັນໄພທຳມະຊາດທີ່ພັດຖະຫຼົ່ມຫຼາຍຄັ້ງ ຈົນເຖິງເຫດກໍ່ການຮ້າຍ ແລະ ການແຜ່ລະບາດຂອງໂຄວິດ.

ເຖິງຢ່າງໃດກໍຕາມ, ຕໍ່ຈາກນີ້ ຄາດວ່າທ່ານ ຮິບກິນ ຈະຕ້ອງຮັບພາລະໜັກໜ່ວງ, ເນື່ອງຈາກຜົນສຳຫຼວດໄດ້ລະບຸວ່າ: ພັກເລເບີມີຄະແນນຄວາມນິຍົມນຳຫລັງພັກຝ່າຍຄ້ານ ຫຼັງປະຊາຊົນບໍ່ພໍໃຈຕໍ່ສະພາບເງິນເຟີ້ທີ່ເພີ່ມສູງຂຶ້ນລວມທັງສະພາບເສດຖະກິດທົດຖອຍ ຄາດວ່າຈະເຂົ້າມາໃນມໍ່ໆນີ້ ຂະນະທີ່ເຫຼືອເວລາອີກບໍ່ຮອດ 9 ເດືອນ ທີ່ນິວຊີແລນຈະເປີດການເລືອກຕັ້ງທົ່ວໄປໃນເດືອນຕຸລາ.

**ແຫຼ່ງຂໍ້ມູນ: REUTERS**

# ຜູ້ຮັກສາການປະທານປະເທດຫວຽດນາມ



ອີງຕາມການລາຍງານຂ່າວເມື່ອວັນທີ 18 ມັງກອນຜ່ານມາ ໃຫ້ຮູ້ວ່າ: ຄະນະກຳມະການປະຈຳສະພາແຫ່ງຊາດຫວຽດນາມໄດ້ປະກາດວ່າ: ທ່ານ ນາງ ໂວ ຖິ ແອັງ ຊວນ ຮອງປະທານປະເທດຫວຽດນາມ ຂຶ້ນຮັບຕຳແໜ່ງຜູ້ຮັກສາການປະທານປະເທດຫວຽດນາມ.

ພາຍຫຼັງທີ່ຄະນະບໍລິຫານງານສູນກາງພັກຄອມມູນິດຫວຽດນາມ ຊຸດທີ XIII ໄດ້ຈັດກອງປະຊຸມເມື່ອວັນທີ 17 ມັງກອນ 2023 ແລະ ທ່ານ ຫງວຽນ ຊວັນ ຟຸກ ໄດ້ປະກາດລາອອກຈາກຕຳແໜ່ງກຳມະການກົມການເມືອງສູນກາງພັກຄອມມູນິດຫວຽດນາມ ແລະ ປະທານປະເທດຫວຽດນາມ.

ຈາກນັ້ນ, ສະພາແຫ່ງຊາດຫວຽດນາມ ຊຸດທີ 15 ໄດ້ຈັດກອງປະຊຸມພິເສດຄັ້ງທີ 3 ໂດຍໄດ້ຮັບຮອງມະຕິທີ່ທ່ານ ຫງວຽນ ຊວັນ ຟຸກ ລາອອກຈາກຕຳແໜ່ງປະທານປະເທດ ແລະ ຍົກເລີກສິດເປັນຜູ້ຕາງໜ້າສະພາແຫ່ງຊາດຫວຽດນາມ ຊຸດທີ 15 ຂອງທ່ານ ຫງວຽນ ຊວັນ ຟຸກ.

ສຳລັບທ່ານ ນາງ ໂວ ຖິ ແອັງ ຊວນ ແມ່ນໄດ້ຮັບເລືອກຕັ້ງເປັນຮອງປະທານປະເທດໃນປີ 2021.

**ແຫຼ່ງຂ່າວ: CRI**

# ກົດໝາຍການຈະລາຈອນຂອງອັງກິດ



ມີການລາຍງານຂ່າວໃນວັນທີ 21 ມັງກອນຜ່ານມາ ໃຫ້ຮູວ່າ: ກົດໝາຍຈະລາຈອນຂອງອັງກິດ ກຳນົດໃຫ້ລົງໂທດປັບໃໝຜູ້ໂດຍສານທີ່ບໍ່ຮັດສາຍແອວນິລະໄພເມື່ອມີສາຍແອວນິລະໄພທີ່ວ່າງ ແລະ ນຳໃຊ້ໄດ້ ໂດຍອາດຖືກປັບໃໝສູງເຖິງ 100 ປອນ ແລະ ສາມາດເພີ່ມຂຶ້ນເຖິງ 500 ປອນ ຖ້າຄະດີຂຶ້ນສູ່ຊັ້ນສານ.

ເຈົ້າໜ້າທີ່ຕຳຫຼວດໃນເຂດແລງຄາສເຊີ (Lancashire) ທາງຕາເວັນຕົກສຽງເໜືອຂອງອັງກິດ ດຳເນີນການລົງໂທດປັບໃໝທ່ານ ຣິຊີ ຊູນັກ ນາຍົກລັດຖະມົນຕີອັງກິດ ຫລັງຈາກກວດພົບວ່າທ່ານກະທຳຜິດກົດໝາຍຈະລາຈອນ ໂດຍການບໍ່ຮັດສາຍນິລະໄພລະຫວ່າງນັ່ງຢູ່ເບາະຜູ້ໂດຍສານທາງຫລັງພາຍໃນລົດທີ່ພວມແລ່ນຢູ່ ໂດຍມີຫລັກຖານເປັນວິດີໂອທີ່ຖືກເຜີຍແຜ່ລົງໃນ Instagram ສ່ວນຕົວ.

ທຳນຽບນາຍົກລັດຖະມົນຕີອັງກິດ ເປີດເຜີຍວ່າ: ທ່ານ ຊູນັກ ຍອມຮັບ ແລະ ຂໍໂທດໃນຄວາມຜິດທີ່ເກີດຂຶ້ນ ແລະ ຢືນຢັນວ່າຈະຈ່າຍຄ່າປັບໃໝ ເຊິ່ງວິດີໂອທີ່ເປັນຫຼັກຖານນັ້ນຖືກບັນທຶກໄວ້ລະຫວ່າງການຢ້ຽມຢາມທາງຕອນເໜືອຂອງອັງກິດ ໂດຍເປັນວິດີໂອເພື່ອປະຊາສຳພັນນະໂຍບາຍຍົກລະດັບການໃຊ້ຈ່າຍງົບປະມານຂອງລັດຖະບານ.

ຂະນະທີ່ການຖືກລົງໂທດປັບໃໝຄັ້ງນີ້ ເປັນການປັບໃໝແບບຄົງທີ່ ແລະ ຖືເປັນຄັ້ງທີ 2 ທີ່ເກີດຂຶ້ນໃນລະຫວ່າງທີ່ທ່ານເຮັດວຽກໃນລັດຖະບານ ເຊິ່ງກ່ອນໜ້ານີ້ໃນເດືອນເມສາປີຜ່ານມາ ທ່ານຖືກປັບໃໝ ພ້ອມກັບທ່ານ ບໍຣິສ ຈອນສັນ ນາຍົກລັດຖະມົນຕີໃນເວລານັ້ນ ຈາກການລະເມີດກົດລັອກດາວໂຄວິດ ໂດຍການເຂົ້າຮ່ວມງານລ້ຽງສະຫລອງວັນເກີດຂອງທ່ານຈອນສັນ ຢູ່ທຳນຽບນາຍົກລັດຖະມົນຕີ ໃນເດືອນມິຖຸນາ 2020.

**ແຫຼ່ງຂ່າວ: LAOPHATANA**




ຊີວິດຂອງຄົນແຕ່ລະຄົນ ມີຄ່າສູງຍິ່ງ ແຕ່ຄົນສ່ວນຫຼາຍຕີລາຄາໃຫ້ຊີວິດມີ ນ້ອຍເກີນໄປ "ຄວາມຮູ້ເລື່ອງຊີວິດ ເປັນຍອດຂອງສາດທັງປວງ"

ເກົ່າເວົ້າ ໄດ້ບົດຮຽນ
ວິເສດ ສະແຫວງສຶກສາ

# ເພື່ອຄວາມສະດວກສະບາຍ ແລະ ຄວາມປອດໄພຂອງຜູ້ໂດຍສານ



ບົດຄວາມທີ່ທ່ານພວມອ່ານຢູ່ນີ້ ໄດ້ສັນຫາມາເລົ່າກ່ຽວກັບບັນຫາຕ່າງໆທີ່ຜູ້ໂດຍສານ ເຄີຍພົບພານເວລາເດີນທາງຢູ່ພາຍໃນ ຫຼື ໄປຕ່າງປະເທດບໍ່ວ່າຈະເປັນການເດີນທາງພາກພື້ນດິນ ຫຼື ທາງອາກາດ. ວ່າກັນວ່າການເດີນທາງ ໂດຍເຄື່ອງບິນນັ້ນຮຽກຮ້ອງໃຫ້ມີການຮັບປະກັນຄວາມປອດໄພ ສູງທີ່ສຸດ ເພາະຜູ້ໂດຍສານທຸກຄົນຕົກຢູ່ໃນສະພາບ "ຕີນຫວິດດິນ".

ແຕ່ໃນຄວາມເປັນຈິງແລ້ວ ເມື່ອສົມທຽບກັບການໂດຍສານທາງໜ້າດິນ ກໍຈະເຫັນວ່າ ອຸບັດເຫດທີ່ເກີດຂຶ້ນກັບຖ້ຽວບິນນັ້ນ ມີໜ້ອຍທີ່ສຸດ. ບັນຫາຫຍຸ້ງຍາກຕົ້ນຕໍ ທີ່ມັກເກີດຂຶ້ນກັບການໂດຍສານທາງອາກາດນັ້ນ ກໍຄືຄວາມຫຼ້າຊ້າຂອງຖ້ຽວບິນຍ້ອນສະພາບການແປປ່ວນຂອງອາກາດເຊັ່ນ: ລົບພາຍຸ, ຝົນຕົກໜັກ, ເມກໝອກໜາປົກຄຸມ ແລະ ອື່ນໆ ນອກນັ້ນ ກໍຍັງມີບັນຫາຫີບເຄື່ອງຕົກເຮ່ຍເສຍຫາຍ ຫຼື ບໍ່ມາຕາມຖ້ຽວບິນທີ່ຜູ້ໂດຍສານໃຊ້ບໍລິການ. ບັນຫາອີກສັ່ນຂວັນຫາຍອີກອັນໜຶ່ງ ທີ່ດົນໆມີເທື່ອໜຶ່ງກໍຄືຄຳຂູ່ລະເບີດເຄື່ອງບິນ ໂດຍກຸ່ມກໍ່ການຮ້າຍ-ກຸ່ມນິຍົມໃຊ້ຄວາມຮຸນແຮງ ແລະ ອື່ນໆ.

ແນວໃດກໍດີ, ໃນຊຸມປີ ຫຼັງໆມານີ້ ຫຼາຍປະເທດໄດ້ເອົາມາດຕະການຕົວຈິງ ເພື່ອຂຶ້ນປະກັນຄວາມປອດໄພ ແລະ ຄວາມສະດວກສະບາຍຂອງຜູ້ໂດຍສານ ຢູ່ ສປຈີນ, ທາງການຂອງປະເທດນີ້ ໄດ້ປະກາດໃຊ້ກົດໝາຍຊົດເຊີຍຕໍ່ຜູ້ໂດຍສານທີ່ພົບບັນຫາຖ້ຽວບິນຊັກຊ້າ ໂດຍໄດ້ກຳນົດຢ່າງຈະແຈ້ງວ່າ ຖ້າຖ້ຽວບິນຊັກຊ້າ ຫຼື ຖືກຍົກເລີກ ຍ້ອນສາເຫດອາກາດບໍ່ດີ, ຍ້ອນບັນຫາການຈະລາຈອນທາງອາກາດຕິດຂັດ, ບໍລິສັດການບິນຕ້ອງຮັບຜິດຊອບຊອກຫາຫ້ອງພັກສຳລັບຜູ້ໂດຍສານທີ່ຕົກຄ້າງ, ໂດຍໃຫ້ຜູ້ໂດຍສານຮັບຜິດຊອບຄ່າໃຊ້ຈ່າຍເອົາເອງ. ແຕ່ຖ້າສະພາບການຊັກຊ້າ ຫຼື ການຍົກເລີກຖ້ຽວບິນເກີດຂຶ້ນໃນສາຍການບິນເອງ, ບໍລິສັດການບິນຕ້ອງຮັບຜິດຊອບຄ່າທີ່ພັກ ແລະ ຄ່າອາຫານ ທັງໝົດສຳລັບຜູ້ໂດຍສານທີ່ຕົກຄ້າງ. ກົດໝາຍສະບັບນີ້, ປະກາດໃຊ້ມາແຕ່ເດືອນກໍລະກົດ 2016, ສ່ວນກົດໝາຍສະບັບເກົ່າທີ່ນຳໃຊ້ກ່ອນໜ້ານັ້ນ ໄດ້ກຳນົດໃຫ້ບໍລິສັດການບິນຈ່າຍຄ່າຊົດເຊີຍ 100% ໃຫ້ຜູ້ໂດຍສານທີ່ຕົກຄ້າງ ບໍ່ວ່າຈະເປັນຍ້ອນສະພາບອາກາດ ຫຼື ຍ້ອນບັນຫາການຈະລາຈອນທາງອາກາດຕິດຂັດ ເຊິ່ງເຫັນວ່າໜັກໜ່ວງເກີນໄປສຳລັບບໍລິສັດ. ຢູ່ປະເທດການາດາ ກໍມີກົດໝາຍຊົດເຊີຍຄວາມເສຍຫາຍໃຫ້ແກ່ຜູ້ໂດຍສານທີ່ປະເຊີນກັບບັນຫາຖ້ຽວບິນຊັກຊ້າ ຫຼື ຖືກຍົກເລີກ. ກົດໝາຍສະບັບນີ້ປະກາດໃຊ້ໃນທ້າຍປີ 2018 ໂດຍໄດ້ກຳນົດວ່າຜູ້ໂດຍສານທີ່ໄດ້ຮັບຄວາມເສຍຫາຍຈະສະພາບຫຼ້າຊ້າຂອງຖ້ຽວບິນນັ້ນ ຈະໄດ້ຮັບເງິນຊົດເຊີຍຈຳນວນ 2.400 ໂດລາການາດາ. ນອກຈາກນັ້ນ ກໍຍັງມີຊົດຊີຍໃນກໍລະນີຜູ້ໂດຍສານໄດ້ຮັບຜົນກະທົບທີ່ເກີດຈາກຄວາມຜິດປົກກະຕິທາງເຕັກນິກຂອງເຄື່ອງບິນເຊັ່ນ: ແອເຢັນພາຍໃນຍົນບໍ່ເຮັດວຽກເກີດໃຫ້ອາກາດອົບເອົ້າຈົນຜູ້ໂດຍສານມີອາການບໍ່ສະບາຍ, ວິນວຽນ ແລະ ອື່ນໆ.

ສວນຢູ່ ສ.ເກົາຫຼີ ນັ້ນ ກໍມີຂ່າວໃນຕົ້ນປີ 2016 ວ່າ: ກະຊວງຂົນສົ່ງຂອງ ສ.ເກົາຫຼີ ໄດ້ອອກລະບຽບເຫຼັກເອົາໂທດ ຄົນໂດຍສານທີ່ກໍ່ອາລະວາດພາຍໃນເຄື່ອງບິນທີ່ພວມບິນຢູ່ເທິງອາກາດ. ສາຍການບິນ ສ.ເກົາຫຼີ ມີປະຫວັດຜູ້ຄົນໂດຍສານຜິດຖຽງຕ່ອຍຕີກັນພາຍໃນຍົນ ຍ້ອນພິດນ້ຳເມົາຫຼາຍຄັ້ງເຊັ່ນ ໃນປີ 2013 ມີ 203 ກໍລະນີ, ໃນປີ 2014 ມີ 354 ກໍລະນີ ແລະ ມີ 369 ກໍລະນີ ໃນປີ 2015. ກົດລະບຽບສະບັບນີ້ ກຳນົດໂທດປັບໃໝສູງສຸດ 10 ລ້ານວອນ (ເທົ່າກັບ 10 ພັນໂດລາ ໃນເວລານັ້ນ). ຕໍ່ຜູ້ເມົາແລ້ວ ກໍອາລະວາດ ແລະ ຖ້າມີຜູ້ບາດເຈັບຍ້ອນການກະທຳດັ່ງກ່າວ ການປັບໃໝ ກໍຈະເພີ່ມຂຶ້ນຕື່ມອີກເທົ່າຕົວ. ຜູ້ທີ່ມີການກະທຳທີ່ເປັນການນາບຂູ່ຕໍ່ນັກບິນ (ປີຫຼົດ) ນັ້ນ ຈະໄດ້ຮັບໂທດຕິດຄຸກສູງສຸດ 5 ປີ ຫຼື ຖືກປັບໃໝ ເປັນເງິນສູງສຸດ 50 ລ້ານວອນ (50 ພັນໂດລາສະຫະລັດ).



ສຶກສາພາສາ ຜ່ານສຽງຫົວ

## ໜຶ່ງຕື້ເທົ່າກັບໜຶ່ງ

*#ບ່າວກະບື*

*ມີຊາຍຄົນໜຶ່ງພະຍາຍາມເຂົ້າໃຈທຳມະຊາດຂອງພະເຈົ້າ ເປັນເຈົ້າ ເຂົາຖາມຂຶ້ນວ່າ: "ໂອ... ພະເຈົ້າເອີຍ, ສຳລັບທ່ານ... ໜຶ່ງຕື້ປີນັ້ນ ມັນຍາວເທົ່າໃດ?"*

ພະເຈົ້າຕອບວ່າ: "ສຳລັບເຮົາ... ໜຶ່ງຕື້ປີ ຍາວສໍ່າກັບໜຶ່ງນາທີນັ້ນລະ"

ຊາຍຄົນນັ້ນຖາມຕໍ່ວ່າ: "ພະເຈົ້າ... ຄັນຊັ້ນ, ໜຶ່ງຕື້ກີບ ມັນຫຼາຍສໍ່າໃດສຳລັບທ່ານ?"

ພະເຈົ້າຕອບວ່າ: "ໜຶ່ງຕື້ກີບສຳລັບເຮົາ ມັນເທົ່າກັບໜຶ່ງກີບນັ້ນລະ"

ສຸດທ້າຍ ຊາຍຄົນນັ້ນຖາມຂຶ້ນວ່າ: "ພະເຈົ້າ... ຄັນຊັ້ນໃຫ້ລູກນ້ອຍ ລັກໜຶ່ງກີບໄດ້ບໍ່?"

ພະເຈົ້າວ່າຂຶ້ນວ່າ: "ເອີ... ຖ້ານາທີດຽວ"

## A BILLION TO ONE

***#BAOKBU***

A man trying to understand the nature of god asked him: "God, how long is a billion years to you?"

God answered: "A billion years is like a minute" Then the man asked, "God, how much is a billion kips to you?

And God replied: "A billion kips is like a kip. " Finally the man asked: "God, could you give me one kip?"

And God said: "Wait a minute".

ກາຕູນ



**ສ – ສະອາດຊາດຫາຍ ສະບາຍຫາຍໃຈ ເອົາຂີ້ຝຸ່ນ!**

● ໂດຍ : ສາວສົ້ນແຕ້ມ

ທະນາຄານພັດທະນາລາວ
LDB Bank

**ຜູ້ຊີ້ນຳ :**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ :**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

**ຄະນະບັນນາທິການ :**
ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ
ທ່ານ ອັນທະວີ ວົງພະຈັນ ຮອງ ບກ
ທ່ານ ເປຄຳ ລໍຄຳສອນ ຮອງ ບກ

**ກອງບັນນາທິການ :**
ນາງ ກົງໃຈ ແສງອຳພັນ
ນາງ ສຸພາວັນ ທອມສະນິດ
ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ :**
ທ່ານ ຄຳຫວັນ ດາລາວົງ
ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ